www.sacombank.com.la

ສໍານັກງານໃຫຍ່ຕັ້ງຢູ່: 044 ຖະໜົນ ແທ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ
Tel: (856) 21 26 79 79 | Email: contact_sl@sacombank.com

Sacombank
ທະນາຄານ ຊາຄອມແບັງ ລາວ



# ບົດລາຍງານ ຖານະການເງິນ 2022

## ສ້າງຮາກຖານໃຫ້ໝັ້ນຄົງ
## ສູ່ການພັດທະນາແບບຍືນຍົງ

## "ສ້າງຮາກຖານໃຫ້ໝັ້ນຄົງ - ສູ່ການພັດທະນາແບບຍືນຍົງ"

ໃນໄລຍະປີ 2022 ທີ່ຜ່ານມາ ໄດ້ປະສົບກັບຄວາມຫຍຸ້ງຍາກຫຼາຍປະການ, ເນື່ອງຈາກໄດ້ຮັບຜົນກະທົບຢ່າງໜັກໜ່ວງຈາກເສດຖະກິດມະຫາພາກຂອງໂລກ ກໍ່ຄືຜົນກະທົບຈາກສະພາບເສດຖະກິດຂອງ ສປປ ລາວ. ກ່ອນເກີດສະພາບການດັ່ງກ່າວ, ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ໄດ້ເລືອກທີ່ຈະປະເຊີນໜ້າກັບສິ່ງທ້າທາຍ, ໂດຍໄດ້ປັບປຸງແກ້ໄຂສະພາບຄວາມຫຍຸ້ງຍາກຢ່າງທັນການ, ແລະ ນຳໃຊ້ແນວໂນ້ມທາງການຕະຫຼາດໃຫ້ເກີດປະໂຫຍດສູງສຸດ ເພື່ອໃຫ້ໄດ້ທິດທາງໃນການແກ້ໄຂການພັດທະນາຕໍ່ໜ້າ. ພາຍໃຕ້ການຊີ້ນຳຂອງບັນດາຄະນະການນຳຈາກ ຊາຄອມແບັງ ຫວຽດນາມ, ທຸກພາກສ່ວນພ້ອມກັນລົງມືຈັດຕັ້ງປະຕິບັດຢ່າງຫ້າວຫັນ, ມີຫົວຄິດປະດິດສ້າງ ແລະ ມີຄວາມຮັບຜິດຊອບຂອງຄະນະສະພາບໍລິຫານ ຊາຄອມແບັງ ລາວ, ພ້ອມກັບຄວາມສາມັກຄີ ແລະ ຄວາມຕັ້ງໃຈຂອງບັນດາພະນັກງານທັງໝົດ, ດ້ວຍການກຳນົດແນວທາງ "ສ້າງຮາກຖານໃຫ້ໝັ້ນຄົງ - ສູ່ການພັດທະນາແບບຍືນຍົງ", ຊາຄອມແບັງ ລາວ ໄດ້ຕັ້ງໃຈສຸມໃສ່ ເຂົ້າໃນວຽກງານປັບປຸງໂຄງສ້າງລາຍການຊັບສິນ, ແຫຼ່ງທຶນ. ເພື່ອເພີ່ມທະວີປະສິດທິຜົນໃນການດຳເນີນງານ, ສຳຮອງການປ້ອງກັນຄວາມສ່ຽງທີ່ອາດຈະເກີດຂຶ້ນ, ຍົກລະດັບລະບົບເຕັກໂນໂລຊີຂໍ້ມູນຂ່າວສານໃຫ້ທັນສະໄໝ, ເຜີຍແຜ່ບັນດາລາຍການເຊື່ອມໂຍງກັບຄູ່ຮ່ວມທຸລະກິດ, ເຜີຍແຜ່ບັນດາກິດຈະກຳພາຍໃນ ເພື່ອສ້າງພື້ນຖານໃຫ້ແກ່ການພັດທະນາແບບຍືນຍົງໃນອະນາຄົດ, ໃຫ້ສາມາດບັນລຸຕາມວິໄສທັດຂອງ ຊາຄອມແບັງ ລາວ ທີ່ວ່າ: "ໃຫ້ກາຍເປັນຜູ້ນຳທະນາຄານທຸລະກິດ ເພື່ອລູກຄ້າລາຍຍ່ອຍ, ທີ່ມີຄວາມທັນສະໄໝທາງດ້ານການໃຫ້ບໍລິການ ແລະ ຄົບວົງຈອນຢູ່ລະດັບຕົ້ນໆ ຂອງ ສປປ ລາວ"

# ສາລະບານ

## ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ


04 ຄຳເຫັນຂອງປະທານສະພາບໍລິຫານ
07 ວິໄສທັດ - ພາລະກິດ - ຄຸນຄ່າແກ່ນສານ
09 ຂໍ້ມູນທົ່ວໄປກ່ຽວກັບທະນາຄານ


## ເຫດການພົ້ນເດັ່ນ


10 ເຫດການພົ້ນເດັ່ນ ປະຈຳປີ 2022


## ການຂະຫຍາຍເຄືອຂ່າຍ


16 ປະຫວັດຄວາມເປັນມາ ແລະ ການຂະຫຍາຍຕົວຂອງທະນາຄານ
18 ລະບົບເຄືອຂ່າຍ Network


## ໂຄງຮ່າງການຈັດຕັ້ງ


20 ໂຄງຮ່າງການຈັດຕັ້ງ
22 ຄະນະສະພາບໍລິຫານ
24 ຄະນະອຳນວຍການໃຫຍ່


## ບົດລາຍງານຖານະການເງິນ


28 ບົດລາຍງານຂອງນັກກວດສອບອິດສະຫຼະ
31 ໃບລາຍງານຜົນການດຳເນີນງານ
32 ໃບລາຍງານຖານະການເງິນ
36 ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
38 ໃບລາຍງານກະແສເງິນສົດ
40 ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ

# ຄຳເຫັນຂອງປະທານ



**ຮຽນບັນດາທ່ານລູກຄ້າ ແລະ ຄູ່ຮ່ວມທຸລະກິດທີ່ຮັກແພງ.**

ໃນປີ 2022, ສະພາບການຂອງໂລກຍັງສືບຕໍ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດ COVID-19 ແລະ ການເກີດສົງຄາມລະຫວ່າງ ປະເທດ ສະຫະພັນຣັດເຊຍ-ອູແກຣນນັ້ນ ໄດ້ສ້າງຄວາມເສຍຫາຍຢ່າງຮຸນແຮງຕໍ່ຊີວິດ, ຊັບສິນ, ເສດຖະກິດ, ສັງຄົມ. ດ້ວຍສະຖານະການດັ່ງກ່າວ ມັນໄດ້ເຮັດໃຫ້ສະພາບເສດຖະກິດ ຂອງ ສປປ ລາວ ຕົກຢູ່ໃນສະພາບຫຍຸ້ງຍາກລຳບາກ, ໃນຂະນະທີ່ຕ້ອງໄດ້ປະເຊີນໜ້າກັບບັນຫາໜີ້ສາທາລະນະ, ເງິນກີບອ່ອນຄ່າເມື່ອທຽບກັບເງິນຕາຕ່າງປະເທດ, ອັດຕາເງິນເຟີ້ເພີ່ມສູງຂຶ້ນ ສະພາບການຂາດແຄນນ້ຳມັນເຊື້ອໄຟ ແລະ ອື່ນໆ.

ຕໍ່ກັບສະພາບຄວາມຫຍຸ້ງຍາກ-ສິ່ງທ້າທາຍທີ່ໄດ້ແກ່ຍາວເປັນເວລາດົນນານດັ່ງທີ່ກ່າວມາຂ້າງເທິງ ແລະ ບໍ່ເຄີຍເກີດຂຶ້ນມາກ່ອນນັ້ນ, ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ກໍ່ໄດ້ຈັດຕັ້ງປະຕິບັດຢ່າງມີຈຸດສຸມເພື່ອຕັ້ງໜ້າໃນການແກ້ໄຂບັນຫາ ປັບປຸງລາຍການຊັບສິນ, ແຫຼ່ງທຶນ ກໍ່ເພື່ອຍົກສູງປະສິດທິພາບໃນການດຳເນີນທຸລະກິດ, ສ້າງແຜນຮອງຮັບການປ້ອງກັນຄວາມສ່ຽງທີ່ອາດຈະເກີດຂຶ້ນ, ຍົກລະດັບລະບົບເຕັກໂນໂລຊີຂໍ້ມູນຂ່າວສານໃຫ້ທັນສະໄໝ, ເຜີຍແຜ່ບັນດາກິດຈະກຳທີ່ເຊື່ອມໂຍງກັບຄູ່ຮ່ວມທຸລະກິດຢ່າງກວ້າງຂວາງ, ເຜີຍແຜ່ບັນດາກິດຈະກຳພາຍໃນ ເພື່ອສ້າງພື້ນຖານໃຫ້ແກ່ການພັດທະນາແບບຍືນຍົງໃນອະນາຄົດ. ໃຫ້ສາມາດບັນລຸໄດ້ຕາມວິໄສທັດຂອງ ຊາຄອມແບັງ ລາວ ທີ່ວ່າ:

**"ໃຫ້ກາຍເປັນຜູ້ນຳ ທະນາຄານທຸລະກິດ ເພື່ອລູກຄ້າລາຍຍ່ອຍ, ທີ່ມີຄວາມທັນສະໄໝທາງດ້ານການໃຫ້ບໍລິການ ແລະ ຄົບວົງຈອນຢູ່ລະດັບຕົ້ນໆ ຂອງ ສປປ ລາວ"**

ກ້າວເຂົ້າສູ່ປີ 2023 ເຕັມໄປດ້ວຍໂອກາດ ແລະ ສິ່ງທ້າທາຍຫຼາຍດ້ານ, ເພື່ອບັນລຸໄດ້ຕາມວິໄສທັດ ແລະ ເປົ້າໝາຍຍຸດທະສາດທີ່ໄດ້ວາງໄວ້, ຊາຄອມແບັງ ລາວ ຈະສືບຕໍ່ສຸມໃສ່ແຫຼ່ງຊັບພະຍາກອນພາຍໃນ, ໝູນໃຊ້ບັນດາທຸກທ່າແຮງຂອງຕົນທີ່ມີຢູ່, ການປັບຕົວໃຫ້ເຂົ້າກັບສະຖານະການປ່ຽນແປງທີ່ຄາດເດົາໄດ້ຍາກໃນອານາຄົດ, ເພື່ອເປັນຮາກຖານທີ່ຈະສາມາດບັນລຸໄດ້ເປົ້າໝາຍທຸລະກິດບົນພື້ນຖານການດຳເນີນທຸລະກິດທີ່ມີ ຄວາມປອດໄພ - ໝັ້ນຄົງ - ມີປະສິດທິຜົນ, ທັງໝົດນັ້ນກໍເພື່ອຍົກສູງ ເຄື່ອງໝາຍການຄ້າຂອງ ຊາຄອມແບັງ ລາວ ໃຫ້ເປັນທີ່ຮູ້ຈັກໃນສັງຄົມຢ່າງກວ້າງຂວາງ.

ສຸດທ້າຍນີ້, ຂ້າພະເຈົ້າຕາງໜ້າໃຫ້ບັນດາສະຫາຍສາມະຊິກພາບໍລິຫານຂອງ ຊາຄອມແບັງ ລາວ, ຂໍສະແດງຄວາມຂອບໃຈມາຍັງຄະນະອຳນວຍການໃຫຍ່ ແລະ ພະນັກງານທັງໝົດຂອງ ຊາຄອມແບັງ ລາວ ທີ່ຍາມໃດກໍ່ມີຄວາມພະຍາຍາມຕັ້ງໃຈສຸມໃສ່ໃນວຽກງານການພັດທະນາຍືນຍົງ ຂອງທະນາຄານ. ຂໍສະແດງຄວາມຮູ້ບຸນຄຸນມາຍັງອົງການຈັດຕັ້ງພັກ - ລັດຖະບານ ແລະ ທະນາຄານ ແຫ່ງ ສປປ ລາວ ຍາມໃດກໍໃຫ້ການສະໜັບສະໜູນ - ສ້າງເງື່ອນໄຂອຳນວຍຄວາມສະດວກ, ຊ່ວຍເຫຼືອທະນາຄານຂອງພວກຂ້າພະເຈົ້າດ້ວຍດີສະເໝີມາ. ພິເສດ, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງບັນດາທ່ານລູກຄ້າ, ຄູ່ຮ່ວມທຸລະກິດ ທີ່ໃຫ້ຄວາມເຊື່ອໝັ້ນ ແລະ ຄຽງຄູ່ ກັບຊາຄອມແບັງ ລາວ ຕະຫຼອດໄລຍະເວລາທີ່ຜ່ານມາ. ແລະ ຫວັງຢ່າງຍິ່ງວ່າ ຈະສືບຕໍ່ໄດ້ຮັບຄວາມໄວ້ວາງໃຈ - ເຊື່ອໝັ້ນ ຈາກບັນດາລູກຄ້າ, ຄູ່ຮ່ວມທຸລະກິດ ໃນໄລຍະເວລາຕໍ່ໜ້າ, ເພື່ອພ້ອມກັນກ້າວໄປສູ່ອະນາຄົດທີ່ຍືນຍົງ, ຮຸ່ງເຮືອງ ແລະ ສີວິໄລ.

**ຂໍຂອບໃຈ**

**ຕາງໜ້າ ສະພາບໍລິຫານ**

**ປະທານ**

**ທ່ານ. VO ANH NHUE**



# ວິໃສທັດ, ພາລະກິດ ແລະ ຄຸນຄ່າແກ່ນສານ

## ວິໃສທັດ

- ເປັນຜູ້ນຳ ທະນາຄານທຸລະກິດ ເພື່ອລູກຄ້າລາຍຍ່ອຍ, ທີ່ມີຄວາມທັນສະໄໝທາງດ້ານການໃຫ້ບໍລິການ ແລະ ຄົບວົງຈອນຢູ່ລະດັບຕົ້ນໆ ຂອງ ສປປ ລາວ.

## ພາລະກິດ

- ສະໜອງຜະລິດຕະພັນທາງດ້ານການເງິນທີ່ຄົບວົງຈອນ, ທັນສະໄໝ ແລະ ໃຫ້ເກີດຄຸນປະໂຫຍດສູງສຸດແກ່ລູກຄ້າ.
- ສະໜອງຄຸນຄ່າສູງສຸດແກ່ຄູ່ຮ່ວມທຸລະກິດ, ຜູ້ລົງທຶນ ແລະ ຜູ້ຖືຮຸ້ນ.
- ນຳຄວາມກ້າວໜ້າ ແລະ ຄວາມໝັ້ນຄົງທີ່ດີທີ່ສຸດ ໃຫ້ແກ່ ພະນັກງານ.
- ການພັດທະນາຄຽງຄູ່ໄປພ້ອມຄວາມຮັບຜິດຊອບຕໍ່ສັງຄົມ.

## ຄຸນຄ່າແກ່ນສານ

- ເປັນຜູ້ບຸກເບີກ ແລະ ຍຶດໝັ້ນຕໍ່ແນວທາງ ເພື່ອຜ່ານພົ້ນສິ່ງທີ່ທ້າທາຍ ແລະ ກ້າວໄປສູ່ຜົນສຳເລັດ.
- ພ້ອມທີ່ຈະປັບປຸງ ແລະ ປ່ຽນແປງເພື່ອການພັດທະນາແບບຍືນຍົງ.
- ສ້າງຄວາມແຕກຕ່າງທີ່ໂດດເດັ່ນ ທາງດ້ານຄວາມຄິດສ້າງສັນໃນການດຳເນີນທຸລະກິດ ແລະ ການຄຸ້ມຄອງບໍລິຫານແບບໃໝ່ທີ່ມີປະສິດຕິພາບ.
- ຮັບປະກັນຄຸນນະພາບທາງດ້ານ ການໃຫ້ບໍລິການ ແລະ ການສ້າງສາຍສຳພັນ ກັບ ຄູ່ຮ່ວມທຸລະກິດ ແມ່ນຫຼັກການຂອງພະນັກງານທຸກຄົນ ທີ່ຕ້ອງປະຕິບັດ.
- ມີຄວາມຮັບຜິດຊອບຕໍ່ຊຸມຊົນ ແລະ ສັງຄົມ




## ຂໍ້ມູນທົ່ວໄປກ່ຽວກັບທະນາຄານ

ທະນາຄານ ຊາຄອມແບັງ ແມ່ນທະນາຄານທຸລະກິດຊັ້ນນຳອັນດັບຕົ້ນໆ ຂອງຫວຽດນາມ ມີຕາໜ່າງເຄືອຂ່າຍຂະຫຍາຍຢ່າງຄອບຄຸມໃນຂອບເຂດສາມຊາດອິນດູຈີນຄື: ສາທາລະນະ ສັງຄົມນິຍົມ ຫວຽດນາມ (ສສ ຫວຽດນາມ), ຣາຊະອານະຈັກ ກຳປູເຈຍ (ປະເທດ ກຳປູເຈຍ) ແລະ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ (ສປປ ລາວ) (ມີຕາໜ່າງຂະຫຍາຍຢ່າງຕໍ່ເນື່ອງໃນ 3 ປະເທດດັ່ງກ່າວ), ໂດຍມີບຸກຄະລາກອນຮ່ວມຂັບເຄື່ອນທຸລະກິດທັງໝົດ 18,500 ຄົນ ແລະ ມີຈຸດໃຫ້ບໍລິການ 566 ສາຂາ ກະຈາຍໄປທົ່ວພາກພື້ນ.

ເລີ່ມຕົ້ນເຄື່ອນໄຫວທຸລະກິດດ້ວຍຮູບແບບສາຂາ ທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 12/12/2008 ເຊິ່ງເປັນຈຸດເລີ່ມຕົ້ນຂອງການເຂົ້າສູ່ຕະຫຼາດຂະແໜງການທະນາຄານຢູ່ຕ່າງປະເທດ ແຫ່ງທຳອິດ ຂອງຊາຄອມແບັງ. ເຖິງແມ່ນວ່າຈະພົບກັບອຸປະສັກ ແລະ ສິ່ງທ້າທາຍຫຼາຍດ້ານ ແຕ່ທະນາຄານກໍ່ຍັງສືບຕໍ່ໄດ້ຮັບໂອກາດ ແລະ ທ່າແຮງສະໜັບສະໜູນຈາກບັນດາລູກຄ້າ, ຄູ່ຮ່ວມທຸລະກິດ ແລະ ບັນດາອົງການຈັດຕັ້ງພັກ - ລັດ ແລະ ອົງການຈັດຕັ້ງສາກົນ ສະເໝີມາ...

ຫຼັງຈາກເຄື່ອນໄຫວພາຍໃຕ້ຮູບແບບສາຂາຕ່າງປະເທດໄດ້ 7 ປີ, ໃນວັນທີ 01/08/2015 ສະຖານະພາບທາງກົດໝາຍຂອງທະນາຄານຖືກປ່ຽນຮູບແບບເປັນ ບໍລິສັດຈຳກັດ ທີ່ມີຊື່ວ່າ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດ ເຊິ່ງເປັນເຈົ້າຂອງໂດຍ ຊາຄອມແບັງ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 15 ອອກໃຫ້ໂດຍ ທະນາຄານ ແຫ່ງ ສປປ ລາວ ຫຼື ທຫລ, ລົງວັນທີ 9 ມິຖຸນາ 2014. ເຊິ່ງເປັນການສ້າງເງື່ອນໄຂໃຫ້ແກ່ທະນາຄານໃນການພັດທະນາບັນດາຜະລິດຕະພັນ - ການບໍລິການທີ່ຫຼາກຫຼາຍ ແລະ ທັນສະໄໝ, ສາມາດຕອບໂຈດຄວາມຕ້ອງການຂອງລູກຄ້າໂດຍຢູ່ພາຍໃຕ້ການນຳພາຂອງ ທະນາຄານແມ່ (ຊາຄອມແບັງ ຫວຽດນາມ).

- **ຊື່ເຕັມຂອງທະນາຄານ:** ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (SAIGON THUONG TIN BANK LAO CO., LTD.)
- **ຊື່ຫຍໍ້ຂອງທະນາຄານ:** ຊາຄອມແບັງ ລາວ (SACOMBANK LAO)
- **ທີ່ຕັ້ງສຳນັກງານໃຫຍ່:** 044 ຖະໜົນ ແທ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ
- **ວັນສ້າງຕັ້ງ:** 12/12/2008 - 12/12/2022 (ຄົບຮອບ 14 ປີ)
- **ເບີໂທ:** (+856) 21 26 79 79
- **Email:** contact_sl@sacombank.com
- **Website:** www.sacombank.com.la
- **Facebook page:** Sacombank Lao

# ເຫດການພົ້ນເດັ່ນ ປະຈຳປີ 2022

### 1. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ແມ່ນ ທະນາຄານທີ່ມີຜົນງານດີເດັ່ນ ໃນການສະໜອງສິນເຊື່ອບ້ວງເງິນຂອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ປະຈຳປີ 2021"

18/03/2022 ຊາຄອມແບັງ ລາວ ເປັນໜຶ່ງໃນ 05 ສະຖາບັນການເງິນ ທີ່ໄດ້ຮັບການຍ້ອງຍໍ ຈາກ ກະຊວງອຸດສາຫະກຳ ແລະ ການຄ້າ ຍົກໃຫ້ເປັນ "ທະນາຄານທີ່ມີຜົນງານດີເດັ່ນໃນການສະໜອງສິນເຊື່ອບ້ວງເງິນຂອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ປະຈຳປີ 2022", ພ້ອມດຽວກັນນັ້ນ ຍັງໄດ້ຍ້ອງຍໍໃຫ້ແກ່ລູກຄ້າຂອງ ຊາຄອມແບັງ ລາວ ຈຳນວນ 8 ຫົວໜ່ວຍທຸລະກິດ ໃຫ້ເປັນ "ຜູ້ປະກອບກິດຈະການດີເດັ່ນ ທີ່ໄດ້ປະກອບ ສ່ວນໃນການນຳໃຊ້ສິນເຊື່ອຂອງກອງທຶນສົ່ງເສີມວິສາຫະກິດ MSME ປະຈຳປີ 2022".



### 2. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ສືບຕໍ່ໄດ້ຮັບແຫຼ່ງທຶນ ພາຍໃຕ້ໂຄງການ MSME A2F ESR




ຕາງໜ້າ ຊາຄອມແບັງ ລາວ ທ່ານ ນາງ ອຸໄລພອນ ໄຊເງິນ ສະມາຊິກສະພາບໍລິຫານ ທັງເປັນຮອງຜູ້ອຳນວຍການໃຫຍ່ ຊາຄອມແບັງ ລາວ ເຂົ້າຮ່ວມພິທີເຊັນສັນຍາສະໜອງທຶນ, ພ້ອມດ້ວຍບັນດາທະນາຄານທຸລະກິດທີ່ເຂົ້າຮ່ວມໂຄງການ ແລະ ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານພິທີເຊັນສັນຍາຄັ້ງນີ້ ທ່ານ ປອ ມະໄນທອງ ວົງໄຊ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ. ກອງທຶນດັ່ງກ່າວ ກໍເພື່ອນຳໄປປ່ອຍກູ້ໃຫ້ກັບບັນດາ MSME ໃນຂະແໜງການຕ່າງໆ ໃນອັດຕາດອກເບ້ຍຕໍ່າ ເພື່ອຟື້ນຟູຜົນກະທົບຈາກພະຍາດໂຄວິດ-19.

### 3. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ສືບຕໍ່ໄດ້ຮັບທຶນ 3% ຈາກ ກອງທຶນສົ່ງເສີມ SME ຈຳນວນ 20 ຕື້ກີບ.

ຊາຄອມແບັງ ລາວ ສືບຕໍ່ໄດ້ຮັບຄວາມໄວ້ວາງໃຈຈາກລັດຖະບານ ໃຫ້ສືບຕໍ່ຮັບບ້ວງເງິນ ງວດທີ II ປະຈຳປີ 2022 ຈຳນວນເງິນ 20 ຕື້ກີບ ເຊິ່ງໄລຍະຜ່ານມາໄດ້ຮັບທຶນທັງໝົດຈຳນວນ 75.5 ຕື້ກີບ. ບ້ວງທຶນດັ່ງກ່າວຖືວ່າເປັນບ້ວງທຶນທີ່ມີຄວາມໝາຍຄວາມສຳຄັນ ຕໍ່ກັບບັນດາຜູ້ປະກອບການ MSME ໃນ ສປປ ລາວ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວ ຢ່າງມີປະສິດຕິພາບ ແລະ ປະສິດຕິຜົນຍິ່ງຂຶ້ນ ພ້ອມທັງເປັນການຊ່ວຍຊຸກຍູ້ ແລະ ສົ່ງເສີມຜູ້ປະກອບການໃຫ້ມີຄວາມເຂັ້ມແຂງ ກໍຄືເສດຖະກິດຂອງ ສປປ ລາວ ໃຫ້ມີຄວາມເຕີບໃຫຍ່ຂະຫຍາຍຕົວຢ່າງໝັ້ນຄົງ.






# ເຫດການພົ້ນເດັ່ນ ປະຈຳປີ 2022 (ຕໍ່)

### 4. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ເຊັນສັນຍາຮ່ວມມືຍຸດທະສາດກັບ ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ (LAP)

ໃນວັນທີ 18 ມີນານີ້, ພິທີເຊັນສັນຍາໄດ້ຈັດຂຶ້ນຢູ່ທີ່ຕຶກສຳນັກງານໃຫຍ່ ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ ທີ່ນະຄອນຫຼວງວຽງຈັນ.

ຊາຄອມແບັງ ລາວ ໄດ້ເຊັນສັນຍາຮ່ວມມືຍຸດທະສາດກັບ ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ (LAP) ເພື່ອປະສານສົມທົບຮ່ວມກັນຜັນຂະຫຍາຍຜະລິດຕະພັນການບໍລິການ ຂອງທະນາຄານ ແລະ ບໍລິສັດ ປະກັນໄພ.




### 5. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ຮ່ວມກິດຈະກຳເປີດບູດ ທີ່ງານ ວັນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ "ການປັບໂຕ ແລະ ຟື້ນຟູ ຄືນ ຈວນກ ສຳລັບການພັດທະນາແບບຍືນຍົງ"




ໃນວັນທີ 22-24 ກໍລະກົດ 2022 ຊາຄອມແບັງ ລາວ ໄດ້ມີກິດຈະກຳເປີດບູດທີ່ ສູນການຄ້າວຽງຈັນເຊັນເຕີ ແລະ ທີ່ ຫ້ອງປະຊຸມ ສະພາການຄ້າ ແລະ ອຸດສະຫະກຳ ແຫ່ງຊາດລາວ. ໂດຍພາຍໃນງານ ນອກຈາກຈະມີຜະລິດຕະພັນ-ການບໍລິການ, ເກມກິດຈະກຳ. ພິເສດຍັງມີໂປໂມຊັ່ນ ອີກຫຼາກຫຼາຍ ໂດຍສະເພາະພິເສດ ໂປໂມຊັ່ນລຸ້ນຮັບ Gift Voucher ເພີ່ມອັດຕາດອກເບ້ຍເງິນຝາກນຳອີກ.

### 6. ການລົງຢ້ຽມຢາມບັນດາລູກຄ້າ SMEs ຂອງ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ)

ການລົງຢ້ຽມຢາມ ບັນດາລູກຄ້າ SMEs ຂອງຊາຄອມແບັງ ລາວ ໃນຄັ້ງນີ້ ນອກຈາກຈະລົງຕິດຕາມຄວາມຄືບໜ້າໃນການນຳໃຊ້ທຶນຂອງ ຈນກ ເຂົ້າໃນການດຳເນີນທຸລະກິດແລ້ວ. ຊາຄອມແບັງ ລາວ ຍັງຖືກມອບໝາຍ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ມອບໃບຍ້ອງຍໍໃຫ້ແກ່ 8 ຫົວໜ່ວຍທຸລະກິດ ໃນ ສປປ ລາວ ກໍຄືລູກຄ້າຂອງ ຊາຄອມແບັງ ລາວ ໃຫ້ເປັນ "ຜູ້ປະກອບກິດຈະການດີເດັ່ນທີ່ໄດ້ປະກອບສ່ວນໃນການນຳໃຊ້ສິນເຊື່ອຂອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ປະຈຳປີ 2021".



### 7. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ສ້າງສິ່ງແວດລ້ອມສີຂຽວ

ເນື່ອງໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ຊາຄອມແບັງ ລາວ ໄດ້ຮ່ວມກັບ ສະມາຄົມນັກຂ່າວ, ສະພາການຄ້າ ພ້ອມດ້ວຍບັນດາຫົວໜ່ວຍທຸລະກິດ ແລະ ບັນດາສະຖາບັນ ການທະນາຄານ ຈັດພິທີປູກຕົ້ນໄມ້ຂຶ້ນ ໃນຈຸດປະສົງບັນລຸຕາມແຜນ ພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX (2021 - 2025) ໃນການເພີ່ມເນື້ອທີ່ ປົກຫຸ້ມສີຂຽວ ກວມເອົາອັດຕາສູງຂຶ້ນ 70% ຂອງພື້ນທີ່ທົ່ວປະເທດ, ທັງເປັນການປຸກຈິດສຳນຶກໃຫ້ອານຸລັກປົກປັກຮັກສາສິ່ງແວດລ້ອມ ທາງທຳມະຊາດໃຫ້ມີຄວາມສົມດູນ ອຸດົມສົມບູນ ແລະ ຫຼຸດຜ່ອນຜົນກະທົບທີ່ເກີດຈາກໄພພິບັດຈາກທຳມະຊາດອີກດ້ວຍ.



### 8. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ຈັດກິດຈະກຳ ພິທີເປີດ-ປິດ "ຍ່າງ-ແລ່ນທຸກບາດກ້າວເພື່ອສັງຄົມ-ຄັ້ງທີ 4"



ໂດຍທຸກບາດກ້າວຍ່າງ-ແລ່ນຂອງພະນັກງານແມ່ນການປະກອບສ່ວນສົມທົບທຶນກໍ່ສ້າງ ບ້ານວັດທະນາທຳຊຸມຊົນໃຫ້ແກ່ຊົນເຜົ່າລາຮາ (La Ha) ທີ່ເມືອງເຊີນລາ (Son La) ຂອງ ສສ ຫວຽດນາມ.

ໂດຍໂຄງການແມ່ນ ສະຫະພັນຊາວໜຸ່ມຫວຽດນາມ ຮ່ວມມືກັບທະນາຄານ ຊາຄອມແບັງ ຫວຽດນາມ ເປັນຜູ້ຈັດຕັ້ງຂຶ້ນ. ນອກຈາກນັ້ນ ຍັງສະແດງໃຫ້ເຫັນເຖິງນ້ຳໃຈມິດຕະພາບ ຂອງສອງຊາດອ້າຍນ້ອງ ລາວ - ຫວຽດນາມ ໃຫ້ມີຄວາມຍືນຍົງ ແລະ ຮ່ວມກັນຍົກ ສູງຄຸນນະພາບຊີວິດ-ສັງຄົມໃຫ້ນັບມື້ນັບດີຂຶ້ນ ໄປເລື້ອຍໆ

### 9. ກອງປະຊຸມສະຫຼຸບຜົນການດຳເນີນທຸລະກິດປະຈຳປີ 2022 ຂອງ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ)

ໃນກອງປະຊຸມ ໄດ້ສຸມໃສ່ວາລະການເສວະນາເປັນສຳຄັນ ໂດຍເປີດໂອກາດ ໃຫ້ບັນດາພະນັກງານ ຊາຄອມແບັງ ລາວ ທົ່ວລະບົບ ສາມາດສະແດງຄວາມຄິດເຫັນ - ຍົກປະເດັນສຳຄັນ ທີ່ຕ້ອງການສະເໜີໃຫ້ແກ້ໄຂ ແລະ ສະໜັບສະໜູນ ຕໍ່ກັບບັນດາຄະນະການນຳຂັ້ນສູງຂອງທະນາຄານ ຊາຄອມແບັງ ຫວຽດນາມ ສາມາດໃຫ້ການຊ່ວຍເຫຼືອຕອບສະໜອງຕໍ່ບັນຫາດັ່ງກ່າວ ເພື່ອນຳມາການເພີ່ມປະສິດຕິພາບຂອງການດຳເນີນທຸລະກິດຂອງທະນາຄານ ຊາຄອມແບັງ ລາວ ທົ່ວລະບົບ.








### 10. ສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ຄົບຮອບ 14 ປີ

ກິດຈະກຳກິລາສາມັກຄີ ເພື່ອສະເຫຼີມສະຫຼອງ ວັນສ້າງຕັ້ງ ຊາຄອມແບັງ ລາວ ຄົບຮອບ 14 ປີ ໃນວັນທີ 12/12/2022 ທີ່ເດີ່ນກຸດໄລຟ. ພາຍໃນງານໄດ້ມີການເຕົ້າໂຮມບັນດາພະນັກງານທົ່ວລະບົບເຂົ້າຮ່ວມຂະບວນການແຂ່ງຂັນກິລາສາມັກຄີ ເຊິ່ງໃນນັ້ນມີການແຂ່ງຂັນກິລາປະເພດ: ບານເຕະຊາຍ, ບານເຕະຍິງ, ຕີດອກ, ກິລາດຶງເຊືອກ, ກິດຈະກຳທີມບິວດິ້ງ...ບັນດາກິດຈະກຳແຂ່ງຂັນຕ່າງໆແມ່ນໄດ້ສ້າງໂອກາດໃຫ້ພະນັກງານມີຄວາມສາມັກຄີປອງດອງ, ແລກປ່ຽນຄວາມຮູ້-ປະສົບການ ພ້ອມທັງເປັນການເພີ່ມທະວີມິດຕະພາບອັນດີງາມພາຍໃນອົງກອນໃຫ້ມີຄວາມສະໜິດແໜ້ນຍິ່ງຂຶ້ນຕື່ມ.



### 11. ງານແຂ່ງຂັນເຮັດອາຫານ The Iron Chef of Sacombank Lao




ເນື່ອງໃນໂອກາດ ຕ້ອນຮັບວັນຊາດຫວຽດນາມ ຄົບຮອບ 77 ປີ (2/9/1945–2/9/2022) ຊາຄອມແບັງ ລາວ ໄດ້ຈັດກິດຈະກຳການແຂ່ງຂັນເຮັດອາຫານຂຶ້ນທີ່ສຳນັກງານໃຫຍ່ ໂດຍຈະໃຫ້ບັນດາພະແນກສາຂາແບ່ງອອກເປັນແຕ່ລະທີມ. ໃນນັ້ນບັນດາທີມທີ່ເຂົ້າຮ່ວມການແຂ່ງຂັນແມ່ນຕ້ອງໄດ້ນຳສະເໜີບັນດາເມນູອາຫານຈານເດັດທີ່ ສາມາດມັດໃຈຄະນະກຳມະການ. ເຊິ່ງທີມທີ່ໄດ້ລາງວັນຊະນະເລີດແມ່ນ ທີມສາຂາທາດຫຼວງ

### 12. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ສົ່ງເສີມຄວາມຮູ້ ແລະ ທັກສະຄວາມສາມາດຂອງພະນັກງານ

ເພື່ອເປັນການສົ່ງເສີມ ແລະ ຍົກສູງປະສິດຕິພາບຂອງການດຳເນີນງານຂອງພະນັກງານ ແລະການປັບປຸງວຽກງານດ້ານການບໍລິການທີ່ສາມາດສະໜອງຄວາມເພິ່ງພໍໃຈຂອງລູກຄ້າໃຫ້ນັບມື້ນັບດີຂຶ້ນນັ້ນ, ຊາຄອມແບັງ ລາວ ໄດ້ຈັດຕັ້ງປະຕິບັດຂະບວນການຝຶກອົບຮົມຕ່າງໆ ຢ່າງຕໍ່ເນື່ອງ ໃຫ້ແກ່ບັນດາພະນັກງານທຸກຄົນເຊັ່ນ: ງານຝຶກອົບຮົມຜູ້ນຳ 4.0, ການຝຶກອົບຮົມທັກສະການຂາຍຢ່າງເປັນມືອາຊີບ, ການຄຸ້ມຄອງຄວາມສ່ຽງ ແລະ ເຜີຍແຜ່ວຽກງານການກວດກາທຸລະກຳຂອງທະນາຄານ...



## ເຫດການພົ້ນເດັ່ນ ປະຈຳປີ 2022 (ຕໍ່)

### 13. ງານສຳມະນາ ປ່ຽນແປງແນວຄິດ ເພື່ອປົດລ໋ອກຜົນສຳເລັດ

ໃນວັນທີ 18/06/2022 ທາງຊາຄອມແບັງ ລາວ ໄດ້ມີການຈັດງານສຳມະນາ ພາຍໃຕ້ຫົວຂໍ້ "ປ່ຽນແປງແນວຄິດ ເພື່ອປົດລ໋ອກຜົນສຳເລັດ" ທີ່ເມືອງສັງທອງ ນະຄອນຫຼວງວຽງຈັນ. ເຊິ່ງໃນງານດັ່ງກ່າວ ໄດ້ມີການແບ່ງປັນ ຄວາມຄິດເຫັນທາງດ້ານທຸລະກິດ, ມີການຝຶກອົບຮົມໃຫ້ແກ່ພະນັກງານ ເພື່ອຍົກລະດັບທັກສະຄວາມສາມາດຕ່າງໆ ໃນນັ້ນໄດ້ມີການເຜີຍແຜ່ປະສົບການ ພາຍໃຕ້ຫົວຂໍ້: ຂະບວນການຂາຍແບບມືອາຊີບ; ການສື່ສານລະຫວ່າງຜູ້ນຳ ແລະ ຜູ້ຕາມ; ພາວະຜູ້ນຳ ແລະ ການເຮັດວຽກເປັນທີມງານ; ຄຸນຄ່າຂອງຄົນ ຢູ່ທີ່ຜົນຂອງງານ




### 14. ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (ຊາຄອມແບັງ ລາວ) ເຂົ້າຮ່ວມ ຂະບວນການແລ່ນ-ຍ່າງ ເພື່ອຂ່ຳນັບຮັບຕ້ອນ ວັນສ້າງຕັ້ງ ທະນາຄານ ແຫ່ງ ສປປ ລາວ ຄົບຮອບ 54 ປີ (7/10/1968 - 7/10/2022)




ໃນຕອນເຊົ້າເວລາ 6 ໂມງ ຂອງວັນທີ 1 ຕຸລາ 2022 ທີ່ ເຂດເສດຖະກິດພິເສດ ບຶງທາດຫຼວງ. ທະນາຄານແຫ່ງ ສປປ ລາວ ແລະ ຊາຄອມແບັງ ລາວ ພ້ອມດ້ວຍບັນດາ ທະນາຄານທຸລະກິດອື່ນໆ ໄດ້ຮ່ວມກັນຈັດຂະບວນການກິລາແລ່ນ-ຍ່າງ ເພື່ອສຸຂະພາບ ເພື່ອຂ່ຳນັບຮັບຕ້ອນ ວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 54 ປີ

(7/10/1968 – 7/10/2022). ເປົ້າໝາຍເພື່ອເສີມສ້າງມິດຕະພາບຄວາມຮັກແພງຢ່າງແໜ້ນແຟ້ນ ລະຫວ່າງບັນດາທະນາຄານທຸລະກິດດ້ວຍກັນ, ພ້ອມທັງເປັນການສົ່ງເສີມການການອອກກຳລັງກາຍເພື່ອສຸຂະພາບທີ່ແຂງແຮງ.

### 15. ກິດຈະກຳຕ່າງໆ ເພື່ອເສີມສ້າງຄວາມສາມັກຄີພາຍໃນໃຫ້ມີຄວາມເຂັ້ມແຂງ.







# ກິດຈະກຳອື່ນໆ

## ປະຫວັດຄວາມເປັນມາ ແລະ ການຂະຫຍາຍຕົວຂອງທະນາຄານ



**12/12/2008**

ເປີດບໍລິການມື້ທຳອິດໃນຮູບແບບສາຂາ ທະນາຄານ ທຸລະກິດຕ່າງ ປະເທດ.

**11/11/2011**

ຊາຄອມແບັງ ລາວ ໄດ້ຂະຫຍາຍເຄືອ ຂ່າຍທຸລະ ກິດ ໂດຍການເປີດ ໜ່ວຍບໍລິການຕະ ຫຼາດເຊົ້າ.

**15/08/2013**

ໄດ້ເປີດໃຊ້ຕຶກອາຄານສຳນັກງານໃຫຍ່ ຫຼັງໃໝ່ທີ່ໃຫຍ່ ແລະ ທັນສະໄໝກວ່າເກົ່າ, ຕັ້ງຢູ່ຖະໜົນແທ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.



**15/08/2013**

ຫັນປ່ຽນເປັນ ທະນາຄານ ທຸລະກິດ ລົງທຶນຕ່າງ ປະເທດ 100%.

**16/05/2016**

ຫັນປ່ຽນໜ່ວຍບໍລິການທົ່ງຂັນຄໍາເປັນສາຂາ ນະ

ຫັນປ່ຽນໜ່ວຍບໍລິການທັດສະດີເປັນສາຂາ ນະຄອນຫຼວງວຽງຈັນ, ທີ່ຕັ້ງອາຄານເລກທີ 175/02 ຖະໜົນ ສາຍລົມ, ບ້ານທັດສະດີ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ.

**10/06/2016**

ເປີດສາຂາ ຈຳປາສັກ, ທີ່ຕັ້ງອາຄານເລກທີ 11-12-13 ຖະໜົນສາລາຂຽວ - ດົງຈອງ ບ້ານ ໂພນກຸງ, ນະຄອນປາກເຊ, ແຂວງ ຈຳປາສັກ.

**26/04/2017**

ຫັນປ່ຽນໜ່ວຍບໍລິການຕະຫຼາດເຊົ້າເປັນ ສາຂາ ທາດຫຼວງ, ຕັ້ງຢູ່ທີ່ຖະໜົນກຳແພງ ເມືອງ, ບ້ານ ທາດຫຼວງໃຕ້, ເມືອງ ໄຊເສດຖາ, ນະຄອນຫຼວງ ວຽງຈັນ.



**29/09/2017**

ເປີດສາຂາສະຫວັນນະເຂດ ທີ່ຕັ້ງອາຄານ ເລກທີ 203, ຖະໜົນ ສີສະຫວ່າງວົງ, ບ້ານ ນາເລົ່າ, ນະຄອນໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ.

**25/06/2018**

ຍ້າຍທີ່ຕັ້ງສາຂາ ນະຄອນຫຼວງວຽງຈັນ ໄປທີ່ຖະໜົນລ້ານຊ້າງ, ບ້ານ ທັດສະດີໃຕ້, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ

**15/02/2019**

ເປີດສາຂາ ລ້ານຊ້າງ ທີ່ຕັ້ງອາຄານ ເລກທີ 044, ຖະໜົນ ແທ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ

**10/01/2020**

ແອັບ 365P@Y ແມ່ນ ທະນາຄານ ເທິງມືຖື ຂອງ ຊາຄອມແບັງ ລາວ ໄດ້ເປີດນຳ ໃຊ້ທົ່ວລະບົບ ເລີ່ມແຕ່ເດືອນ 10/01/2020



**02/03/2020**

ຊາຄອມແບັງ ລາວໄດ້ເປີດ ໃຫ້ບໍລິ ການລະບົບເຄືອຂ່າຍ Lapnet ຢ່າງເປັນທາງການ ເລີ່ມແຕ່ວັນທີ 02/03/2020

**11/11/2020**

ຊາຄອມແບັງ ລາວ ໄດ້ຮັບ ລາງວັນທະ ນາຄານທີ່ໃຫ້ບໍລິການ SMEs ທີ່ດີທີ່ສຸດໃນສປປ ລາວ ປະຈຳປີ 2020 ຈາກວາລະສານ 'Global Banking and Finance Review' ຂອງປະເທດອັງກິດ.

**12/12/2021**

ທະນາຄານສືບຕໍ່ໄດ້ຮັບການຄັດເລືອກໃຫ້ເປັນທະນາຄານ SMEs ທີ່ດີທີ່ສຸດໃນສປປ ລາວ ຈາກວາລະສານ 'Global Banking and Finance Review' ຂອງປະ ເທດອັງກິດ ປະຈຳປີ 2021.

**18/03/2022**

ຊາຄອມແບັງ ລາວ ເປັນໜຶ່ງໃນ 05 ສະຖາບັນການເງິນ ທີ່ໄດ້ຮັບການຍ້ອງຍໍ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ຍົກໃຫ້ເປັນ "ທະນາຄານທີ່ມີຜົນງານດີເດັ່ນໃນການສະໜອງສິນເຊື່ອບ້ວງເງິນຂອງກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME) ປະຈຳປີ 2022",

## ລະບົບເຄືອຂ່າຍ Network




★ ສາຂາ ແລະ ຈຸດບໍລິການ
Sacombank business location

$ ຈຸດໂອນເງິນນຳທະນາຄານຕົວແທນ
Interbank transaction office

ຮອດວັນທີ / As of: 31/12/2022

ສາຂາ ແລະ ຈຸດບໍລິການ
Business location
**566**
ຈຸດ
Locations

ທຶນຈົດທະບຽນ
Chartered capital
**798**
ລ້ານ USD
Mio USD

ທຶນຕົນເອງ
Equity capital
**1,270**
ລ້ານ USD
Mio USD

ຈຸດບໍລິການ ທີ່ລາວ
Business location in Laos
**5**
ຈຸດ
Locations

| | |
|---|---|
| ຊື່ພາສາອັງກິດ | : Lanexang Branch (1st, 2nd Floor) |
| ຊື່ພາສາລາວ | : ສາຂາ ລ້ານຊ້າງ (ຊັ້ນ 1, 2) |
| ທີ່ຕັ້ງສຳນັກງານ | : 044 ຖະໜົນ ແຫ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ |
| ໂທ | : 021 265 726 |

| | |
|---|---|
| ຊື່ພາສາອັງກິດ | : Savannakhet Branch |
| ຊື່ພາສາລາວ | : ສາຂາ ສະຫວັນນະເຂດ |
| ທີ່ຕັ້ງສຳນັກງານ | : 203 ຖະໜົນ ສີສະຫວ່າງວົງ, ບ້ານ ນາເລົ່າ, ນະຄອນ ໄກສອນ ພົມວິຫານ, ແຂວງ ສະຫວັນນະເຂດ, ສປປ ລາວ |
| ໂທ | : 041 260 333 |

| | |
|---|---|
| ຊື່ພາສາອັງກິດ | : Vientiane Capital Branch |
| ຊື່ພາສາລາວ | : ສາຂາ ນະຄອນຫຼວງວຽງຈັນ |
| ທີ່ຕັ້ງສຳນັກງານ | : ຖະໜົນ ລ້ານຊ້າງ, ບ້ານ ຫັດສະດີໃຕ້, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ |
| ໂທ | : 021 26 79 79 - Ext. 253 |

| | |
|---|---|
| ຊື່ພາສາອັງກິດ | : Champasak Branch |
| ຊື່ພາສາລາວ | : ສາຂາ ຈຳປາສັກ |
| ທີ່ຕັ້ງສຳນັກງານ | : 11-12-13 ຖະໜົນ ສາລາຂວັນ - ດົງຈອງ, ບ້ານ ໄພນຽມ, ນະຄອນ ປາກເຊ, ແຂວງ ຈຳປາສັກ, ສປປ ລາວ |
| ໂທ | : 031 410 411 |

| | |
|---|---|
| ຊື່ພາສາອັງກິດ | : That Luang Branch |
| ຊື່ພາສາລາວ | : ສາຂາ ທາດຫຼວງ |
| ທີ່ຕັ້ງສຳນັກງານ | : ຖະໜົນ ກຳແພງເມືອງ, ບ້ານ ທາດຫຼວງໃຕ້, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ |
| ໂທ | : 021 263 344 |

# ໂຄງຮ່າງການຈັດຕັ້ງ






## ຄະນະສະພາບໍລິຫານ

**A — Mr. VO ANH NHUE**

**ປະທານສະພາບໍລິຫານ**

ປະສົບການໃນ ວຽກງານການເງິນ - ການທະນາຄານ ຫຼາຍກວ່າ 29 ປີ

**B — Mr. TRINH VAN TY**

**ຮອງ ປະທານສະພາບໍລິຫານ**

ປະສົບການໃນວຽກງານການເງິນ - ການທະນາຄານ ຫຼາຍກວ່າ 15 ປີ

**C — Mr. PHAM QUANG PHU**

**ສະມາຊິກ ສະພາບໍລິຫານ**

ທັງເປັນ ອຳນວຍການໃຫຍ່ ປະສົບການໃນ ວຽກງານການເງິນ - ການທະນາຄານຫຼາຍກວ່າ 21 ປີ

**D — Mrs. OULAYPHONE SONGEUN**

**ສະມາຊິກ ສະພາບໍລິຫານ**

ທັງເປັນ ຮອງອຳນວຍການໃຫຍ່ ປະສົບການໃນ ວຽກງານການເງິນ - ການທະນາຄານຫຼາຍກວ່າ 17 ປີ

**E — Mr. PHAN THANH TUAN**

**ສະມາຊິກ ສະພາບໍລິຫານ**

ທັງເປັນ ຮອງອຳນວຍການໃຫຍ່ ປະສົບການໃນ ວຽກງານການເງິນ - ການທະນາຄານຫຼາຍກວ່າ 17 ປີ




# ຄະນະອຳນວຍການໃຫຍ່

**A**

**Mr. PHAM QUANG PHU**

**ສະມາຊິກ ສະພາບໍລິຫານ**

ທັງເປັນ ອຳນວຍການໃຫຍ່ ປະສົບການໃນ
ວຽກງານການເງິນ - ການທະນາຄານຫຼາຍກວ່າ 21 ປີ

**B**

**Mrs. OULAYPHONE SONGEUN**

**ສະມາຊິກ ສະພາບໍລິຫານ**

ທັງເປັນ ຮອງອຳນວຍການໃຫຍ່ ປະສົບການໃນ
ວຽກງານການເງິນ - ການທະນາຄານຫຼາຍກວ່າ 17 ປີ

**C**

**Mr. PHAN THANH TUAN**

**ສະມາຊິກ ສະພາບໍລິຫານ**

ທັງເປັນ ຮອງອຳນວຍການໃຫຍ່ ປະສົບການໃນ
ວຽກງານການເງິນ - ການທະນາຄານຫຼາຍກວ່າ 17 ປີ

## ຂໍ້ມູນທົ່ວໄປຂອງທະນາຄານ

ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (“ທະນາຄານ”) ເບື້ອງຕົ້ນແມ່ນຖືກສ້າງເປັນສາຂາຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ (“ຊາຄອມແບັງ”), ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດໃນປະເທດຫວຽດນາມ. ທະນາຄານດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 55 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ລົງວັນທີ 9 ທັນວາ 2008.

ໃນວັນທີ 1 ສິງຫາ 2015, ສະຖານະພາບທາງກົດໝາຍຂອງທະນາຄານຖືກປ່ຽນຮູບແບບເປັນ ບໍລິສັດຈຳກັດເອກະຊົນ ທີ່ ຊາຄອມແບັງເປັນເຈົ້າຂອງທັງໝົດຕາມການອະນຸມັດຂອງ ທຫລ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 15 ລົງວັນທີ 9 ມິຖຸນາ 2014. ໃນວັນທີ 13 ທັນວາ 2021, ທະນາຄານໄດ້ຮັບໃບອະນຸຍາດດຳເນີນທຸລະກິດການທະນາຄານສະບັບລ່າສຸດເລກທີ 07 ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງເລກທີ 2095/ຈທລ, ລົງວັນທີ 23 ທັນວາ 2021.

ນະວັນທີ 31 ທັນວາ 2022, ທຶນຈົດທະບຽນທີ່ໄດ້ຖອກແລ້ວ ແມ່ນ 477,130,539,793 ກີບ (ນະວັນທີ 31 ທັນວາ 2021 ແມ່ນ 317,130,539,793 ກີບ).

ກິດຈະກຳຫຼັກຂອງທະນາຄານແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການທາງການເງິນອື່ນໆໃນ ສປປ ລາວ.

ທະນາຄານຕັ້ງຢູ່ອາຄານເລກທີ 044, ຖະໜົນ ແທ່ງບຸນ, ບ້ານ ຫາຍໂສກ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ແລະ ມີ ຫ້າ (5) ສາຂາ ນະວັນທີ 31 ທັນວາ 2022.

### ຄະນະສະພາບໍລິຫານ

ສະມາຊິກສະພາບໍລິຫານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2022 ແລະ ນະວັນທີອອກເອກະສານລາຍງານສະບັບນີ້ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ Nguyen Thuc Vinh | ປະທານ | ແຕ່ງຕັ້ງວັນທີ 16 ສິງຫາ 2019<br>ລາອອກວັນທີ 31 ພຶດສະພາ 2022 |
| ທ່ານ Vo Anh Nhue | ປະທານ | ແຕ່ງຕັ້ງວັນທີ 19 ສິງຫາ 2022 |
| ທ່ານ Trinh Van Ty | ຮອງປະທານ ແລະ ສະມາຊິກອິດສະຫຼະ | ແຕ່ງຕັ້ງຄືນວັນທີ 19 ສິງຫາ 2022 |
| ທ່ານ Pham Quang Phu | ສະມາຊິກ | ແຕ່ງຕັ້ງຄືນວັນທີ 19 ສິງຫາ 2022 |
| ທ່ານ ນາງ ອຸໄລພອນ ໂສເງິນ | ສະມາຊິກ | ແຕ່ງຕັ້ງຄືນວັນທີ 19 ສິງຫາ 2022 |
| ທ່ານ Phan Thanh Tuan | ສະມາຊິກ | ແຕ່ງຕັ້ງຄືນວັນທີ 19 ສິງຫາ 2022 |

### ຄະນະບໍລິຫານ

ສະມາຊິກຄະນະອຳນວຍການໃນປີທີ່ສິ້ນສຸດວັນທີ 31 ທັນວາ 2022 ແລະ ນະວັນທີອອກເອກະສານລາຍງານສະບັບນີ້ປະກອບມີ:

| ຊື່ | ຕຳແໜ່ງ | ວັນທີແຕ່ງຕັ້ງຄືນ |
|---|---|---|
| ທ່ານ Pham Quang Phu | ຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 3 ສິງຫາ 2022 |
| ທ່ານ ນາງ ອຸໄລພອນ ໂສເງິນ | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 3 ສິງຫາ 2022 |
| ທ່ານ Phan Thanh Tuan | ຮອງຜູ້ອຳນວຍການໃຫຍ່ | ແຕ່ງຕັ້ງຄືນວັນທີ 3 ສິງຫາ 2022 |



### ຕົວແທນດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງທະນາຄານພາຍໃນປີທີ່ສິ້ນສຸດວັນທີ 31 ທັນວາ 2022 ແລະ ນະວັນທີຂອງເອກະສານລາຍງານສະບັບນີ້ແມ່ນທ່ານ Pham Quang Phu - ຜູ້ອຳນວຍການໃຫຍ່.

### ນັກກວດສອບບັນຊີ

ນັກກວດສອບບັນຊີຂອງທະນາຄານ ແມ່ນ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

### ບົດລາຍງານຂອງຄະນະອຳນວຍການ

ຄະນະອຳນວຍການຂອງ ທະນາຄານ ໄຊ່ງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ (“ທະນາຄານ”) ມີຄວາມຍິນດີໃນການນຳສະເໜີບົດລາຍງານ ແລະ ເອກະສານລາຍງານການເງິນຂອງທະນາຄານ ນະວັນທີ 31 ທັນວາ 2022 ແລະ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ.

### ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ກັບເອກະສານລາຍງານການເງິນ

ຄະນະອຳນວຍການ ແມ່ນມີຄວາມຮັບຜິດຊອບໃນການສ້າງເອກະສານລາຍງານການເງິນຂອງແຕ່ລະປີການບັນຊີ ໃຫ້ຖືກຕ້ອງຕາມຄວາມເປັນຈິງຕາມຖານະທາງການເງິນຂອງທະນາຄານ, ຜົນການດຳເນີນງານ ແລະ ກະແສເງິນສົດພາຍໃນປີ. ໃນການສ້າງເອກະສານລາຍງານການເງິນດັ່ງກ່າວ ຄະນະອຳນວຍການຕ້ອງປະຕິບັດດັ່ງນີ້:

- ເລືອກເຟັ້ນນະໂຍບາຍດ້ານການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝໍ່າສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດ, ທຸກຂໍ້ຂັດແຍ່ງ ຫຼື ຂໍ້ແຕກຕ່າງທີ່ສຳຄັນຕ້ອງຖືກນຳມາເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນ; ແລະ
- ສ້າງເອກະສານລາຍງານການເງິນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ, ຍົກເວັ້ນແຕ່ທາງທະນາຄານຫາກຕັ້ງຂໍ້ສົມມຸດຕິຖານ ຫຼື ຄາດຄະເນວ່າທະນາຄານບໍ່ສາມາດທີ່ຈະດຳເນີນທຸລະກິດຕໍ່ໄປໄດ້.

ຄະນະອຳນວຍການຮັບປະກັນວ່າ ການບັນທຶກບັນຊີໄດ້ຖືກປະຕິບັດຢ່າງຖືກຕ້ອງ ເຊິ່ງໄດ້ເປີດເຜີຍຖານະການເງິນຂອງທະນາຄານຢ່າງເໝາະສົມໃນທຸກເວລາ ແລະ ຮັບປະກັນວ່າການບັນທຶກບັນຊີແມ່ນສອດຄ່ອງກັບລະບົບການບັນຊີທີ່ໄດ້ນຳໃຊ້. ນອກນັ້ນ, ຄະນະອຳນວຍການຍັງຕ້ອງຮັບຜິດຊອບຕໍ່ການຮັກສາຊັບສິນຂອງທະນາຄານ ແລະ ຮັບປະກັນວ່າທະນາຄານມີຂັ້ນຕອນການກວດສອບທີ່ເໝາະສົມເພື່ອປ້ອງກັນການສໍ້ໂກງ ຫຼື ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະອຳນວຍການໄດ້ຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງໃນການກະກຽມເອກະສານລາຍງານການເງິນທີ່ໄດ້ຄັດຕິດມານີ້.

### ຄຳຖະແຫຼງການຂອງຄະນະບໍລິຫານ

ຄະນະອຳນວຍການຂໍຖະແຫຼງວ່າ, ໃນຄຳເຫັນຂອງຄະນະອຳນວຍການ, ເອກະສານລາຍງານການເງິນໄດ້ຖືກກະກຽມໂດຍສອດຄ່ອງກັບກົດ ໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

**ໃນນາມ ແລະ ຕາງໜ້າຄະນະອຳນວຍການ:**

**ທ່ານ Pham Quang Phu**
**ຜູ້ອຳນວຍການໃຫຍ່**
ນະຄອນຫລວງວຽງຈັນ, ສປປ ລາວ
4 ເມສາ 2023

## ບົດລາຍງານຂອງນັກກວດສອບອິດສະຫຼະ

ເລກທີອ້າງອີງ: 11466832/67155297

**ຮຽນ: ເຈົ້າຂອງ ທະນາຄານ ໄຊງ່ອນເທືອງຕື່ນ ລາວ ຈຳກັດຜູ້ດຽວ**

### ຄຳເຫັນ

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບ ເອກະສານລາຍງານການເງິນຂອງທະນາຄານ ໄຊງ່ອນເທືອງຕື່ນ ລາວ ຈຳກັດຜູ້ດຽວ ("ທະນາຄານ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະວັນທີ 31 ທັນວາ 2022, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບປີທີ່ສິ້ນສຸດວັນທີດັ່ງກ່າວ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ປະກອບດ້ວຍບົດສະຫຼຸບຂອງບັນດານະໂຍບາຍທາງບັນຊີທີ່ສຳຄັນ.

ໃນຄຳເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນຂອງທະນາຄານໄດ້ຖືກກະກຽມໂດຍສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການຕ່າງໆທີ່ໄດ້ວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

### ພື້ນຖານການອອກຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບໂດຍສອດຄ່ອງກັບ ມາດຕະຖານສາກົນດ້ານການກວດສອບ (ISAs). ບັນດາຄວາມຮັບຜິດຊອບຂອງພວກຂ້າພະເຈົ້າທີ່ກຳນົດໄວ້ພາຍໃຕ້ບັນດາມາດຕະຖານເຫຼົ່ານັ້ນ ໄດ້ຖືກອະທິບາຍເພີ່ມເຕີມໃນວັກ ຄວາມຮັບຜິດຊອບຂອງນັກກວດສອບ ໃນການກວດສອບເອກະສານລາຍງານການເງິນ ຂອງບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າແມ່ນມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ ແລະ ບັນດາຂໍ້ກຳນົດທາງດ້ານຈັນຍາບັນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນຂອງພວກຂ້າພະເຈົ້າໃນ ສປປ ລາວ, ແລະ ພວກຂ້າພະເຈົ້າຍັງໄດ້ປະຕິບັດບັນດາຄວາມຮັບຜິດຊອບທາງດ້ານຈັນຍາບັນອື່ນໆໂດຍສອດຄ່ອງກັບບັນດາຂໍ້ກຳນົດ ແລະ ກົດຈັນຍາບັນທາງບັນຊີສຳລັບນັກວິຊາຊີບບັນຊີຂອງ ສະພາມາດຕະຖານສາກົນດ້ານຈັນຍາບັນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ.

### ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ ບົດອະທິບາຍເລກທີ 2 ຂອງເອກະສານລາຍງານການເງິນ ທີ່ໄດ້ອະທິບາຍພື້ນຖານຂອງການບັນຊີທີ່ໄດ້ຖືກນຳໃຊ້ໂດຍທະນາຄານ. ບັນດານະໂຍບາຍການບັນຊີເຫຼົ່ານີ້ແມ່ນບໍ່ໄດ້ມີຈຸດປະສົງທີ່ຈະນຳສະເໜີຖານະທາງການເງິນ, ຜົນການດຳເນີນງານ ແລະ ກະແສເງິນສົດຂອງທະນາຄານ ເພື່ອໃຫ້ສອດຄ່ອງກັບຫຼັກການບັນຊີສາກົນທີ່ຍອມຮັບໂດຍທົ່ວໄປ.

ຄຳເຫັນຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ຮັບການແກ້ໄຂຕໍ່ກັບບັນຫາດັ່ງກ່າວ.

### ຄວາມຮັບຜິດຊອບຂອງຄະນະອຳນວຍການຕໍ່ກັບເອກະສານລາຍງານການເງິນ

ຄະນະອຳນວຍການການຂອງທະນາຄານ ແມ່ນມີຄວາມຮັບຜິດຊອບໃນການກະກຽມເອກະສານລາຍງານການເງິນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການການບັນຊີແຫ່ງ ສປປ ລາວ ແລະ ບັນດາລະບຽບການອື່ນໆທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງໃນການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ, ແລະ ສຳລັບບັນດາການຄວບຄຸມ ພາຍໃນທີ່ກ່ຽວຂ້ອງທາງຄະນະອຳນວຍການເຫັນວ່າ ມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດຕ່າງໆ.



ໃນການກະກຽມເອກະສານລາຍງານການເງິນ, ຄະນະອຳນວຍການ ມີຄວາມຮັບຜິດຊອບໃນການປະເມີນຄວາມອາດສາມາດຂອງທະນາຄານ ທາງດ້ານຄວາມສືບເນື່ອງໃນການດຳເນີນທຸລະກິດ, ເປີດເຜີຍບັນຫາທີ່ກ່ຽວຂ້ອງກັບຄວາມສືບເນື່ອງໃນການດຳເນີນທຸລະກິດຖ້າມີ ແລະ ນຳໃຊ້ພື້ນຖານການບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຈົນກວ່າທີ່ທາງຄະນະອຳນວຍການຂອງທະນາຄານຫາກເຫັນວ່າທຸລະກິດບໍ່ມີຄວາມອາດສາມາດໃນການດຳເນີນງານຕໍ່ໄດ້ ຫຼື ໃນກໍລະນີທີ່ທາງຄະນະອຳນວຍການຂອງທະນາຄານ ມີຈຸດປະສົງຢາກຍຸບເລີກ ຫຼື ຢຸດກິດຈະການ.

### ຄວາມຮັບຜິດຊອບຂອງນັກກວດສອບໃນການກວດສອບເອກະສານລາຍງານການເງິນ

ຈຸດປະສົງໃນການກວດສອບຂອງພວກຂ້າພະເຈົ້າແມ່ນເພື່ອຮັບປະກັນ ວ່າເອກະສານລາຍງານການເງິນໂດຍພາບລວມແມ່ນປາສະຈາກຂໍ້ຜິດພາດອັນໃຫຍ່ຫຼວງ, ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ ແລະ ເພື່ອການອອກບົດລາຍງານຂອງນັກກວດສອບ ທີ່ປະກອບມີຄຳເຫັນຂອງພວກຂ້າພະເຈົ້າຕໍ່. ການຮັບປະກັນທີ່ສົມເຫດສົມຜົນແມ່ນການຮັບປະກັນໃນລະດັບສູງ ແຕ່ບໍ່ໄດ້ຮັບປະກັນວ່າ ການກວດສອບທີ່ໄດ້ດຳເນີນໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ ຈະສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ອາດເກີດຂຶ້ນໄດ້ຕະຫຼອດທັງໝົດ. ຂໍ້ຜິດພາດສາມາດເກີດຂຶ້ນໄດ້ຈາກການສໍ້ໂກງ ຫຼື ຍ້ອນຂໍ້ຜິດພາດຕ່າງໆ ແມ່ນຖືກພິຈາລະນາວ່າ ສຳຄັນ ຈາກລາຍການດຽວ ຫຼື ຫຼາຍລາຍການລວມກັນ ແລະ ມີອິດທິພົນຕໍ່ການຕັດສິນໃຈທາງເສດຖະກິດຂອງຜູ້ນຳໃຊ້ເອກະສານລາຍງານການເງິນ.

ໃນການກວດສອບໂດຍສອດຄ່ອງກັບ ມາດຕະຖານດ້ານການກວດສອບສາກົນ, ພວກຂ້າພະເຈົ້າໄດ້ໃຊ້ການຕັດສິນ ແລະ ວິນິໄສແບບມືອາຊີບ ໃນຕະຫຼອດການດຳເນີນການກວດສອບ. ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນບັນດາຄວາມສ່ຽງຂອງຂໍ້ຜິດພາດອັນໃຫຍ່ຫຼວງຂອງເອກະສານລາຍງານການເງິນ ບໍ່ວ່າຈະເປັນຍ້ອນການສໍ້ໂກງ ຫຼື ຍ້ອນຄວາມຜິດພາດຕ່າງໆ, ອອກແບບ ແລະ ດຳເນີນຂັ້ນຕອນການກວດສອບເພື່ອຮອງຮັບບັນດາຄວາມສ່ຽງເຫຼົ່ານັ້ນ ແລະ ເພື່ອຮັບປະກັນວ່າຈະໄດ້ຮັບເອົາຫຼັກຖານການກວດສອບທີ່ພຽງພໍ ແລະ ເໝາະສົມ ເພື່ອເປັນພື້ນຖານໃຫ້ແກ່ການອອກຄຳເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການບໍ່ສາມາດກວດພົບຂໍ້ຜິດພາດອັນໃຫຍ່ຫຼວງທີ່ມີຜົນມາຈາກການສໍ້ໂກງ ແມ່ນສູງກວ່າຜົນທີ່ມາຈາກຄວາມຜິດພາດ, ເນື່ອງຈາກວ່າການສໍ້ໂກງອາດລວມມີ ການສົມຮູ້ຮ່ວມຄິດ, ການປອມແປງ, ການລະເລີຍໂດຍຕັ້ງໃຈ, ການບິດເບືອນ ຫຼື ລະເມີດຫຼັກການການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈກ່ຽວກັບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບຂັ້ນຕອນການກວດສອບທີ່ເໝາະສົມກັບສະພາບການຕ່າງໆ ແຕ່ບໍ່ໄດ້ມີຈຸດປະສົງເພື່ອສະແດງຄຳເຫັນກ່ຽວກັບປະສິດທິພາບຂອງການຄວບຄຸມພາຍໃນຂອງທະນາຄານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ພື້ນຖານຂອງບັນຊີວ່າດ້ວຍຫຼັກການແຫ່ງຄວາມສືບເນື່ອງໃນການດຳເນີນທຸລະກິດ ຂອງຄະນະບໍລິຫານການ ໂດຍອີງຕາມຫຼັກຖານການກວດສອບທີ່ໄດ້ຮັບ ບໍ່ວ່າຈະເປັນຄວາມບໍ່ແນ່ນອນທີ່ສຳຄັນທີ່ອາດເກີດຂຶ້ນ ຈາກບັນດາເຫດການ ຫຼື ເງື່ອນໄຂທີ່ອາດເປັນຂໍ້ສົງໃສທີ່ສຳຄັນກ່ຽວກັບຄວາມອາດສາມາດຂອງທະນາຄານໃນການສືບເນື່ອງໃນການດຳເນີນທຸລະກິດ. ຖ້າຫາກພວກຂ້າພະເຈົ້າ ສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ສຳຄັນເກີດຂຶ້ນ, ພວກຂ້າພະເຈົ້າຈະໄດ້ລະບຸໃນບົດລາຍງານຂອງນັກກວດສອບອິດສະຫຼະ ໃນການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ເພື່ອໃຫ້ສະເໜີໃຫ້ເອົາໃຈໃສ່ຕື່ມອີກ ຫຼື ຖ້າຫາກຂາດການເປີດເຜີຍທີ່ພຽງພໍ, ພວກຂ້າພະເຈົ້າຈະຕ້ອງໄດ້ສະແດງຄຳເຫັນແບບມີເງື່ອນໄຂ. ການສະຫຼຸບຂອງພວກຂ້າພະເຈົ້າອີງຕາມຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ຂອງບົດລາຍງານຂອງນັກກວດສອບອິດສະຫຼະ. ເຖິງຢ່າງໃດກໍ່ຕາມ, ບັນດາເຫດການໃນອານະຄົດ ຫຼື ເງື່ອນໄຂອື່ນໆ ອາດເປັນສາເຫດເຮັດໃຫ້ທະນາຄານຍຸດຕິການສືບຕໍ່ຄວາມສືບເນື່ອງໃນການດຳເນີນທຸລະກິດ.

- ປະເມີນຄວາມເໝາະສົມຂອງບັນດານະໂຍບາຍທາງບັນຊີທີ່ນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງການບັນຊີ ແລະ ການເປີດເຜີຍທີ່ກ່ຽວຂ້ອງທີ່ໄດ້ຖືກນຳໃຊ້ໂດຍຄະນະອຳນວຍການ.

ພວກຂ້າພະເຈົ້າໄດ້ປຶກສາຫາລືກັບຄະນະອຳນວຍການຂອງທະນາຄານກ່ຽວກັບບັນຫາອື່ນໆ, ການວາງແຜນຂອບເຂດ ແລະ ເວລາຂອງການກວດສອບ ແລະ ຂໍ້ພົບເຫັນທາງການກວດສອບທີ່ສຳຄັນ, ລວມເຖິງບັນດາຂໍ້ບົກຜ່ອງທີ່ສຳຄັນຕ່າງໆໃນການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າພົບເຫັນໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

**ບໍລິສັດ ເອີນແອນຢັງ ລາວ ຈຳກັດ**

Ernst & Young Lao Ltd

ນະຄອນຫຼວງວຽງຈັນ, ສປປ ລາວ
4 ເມສາ 2023



## ໃບລາຍງານຜົນການດຳເນີນງານ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

| ລຳດັບ | ລາຍການ | ບົດອະທິບາຍ ເລກທີ | 2022 ລ້ານກີບ | 2021 ລ້ານກີບ |
|---|---|---|---|---|
| **ກ.** | **ລາຍຮັບ ແລະ ລາຍຈ່າຍໃນການດຳເນີນງານ** | | | |
| **1** | **ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **104,566** | **109,523** |
| **2** | **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **3** | **(67,199)** | **(75,605)** |
| **I.** | **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | | **37,367** | **33,918** |
| **3** | **ລາຍຮັບຄ່າທຳນຽມ ແລະ ການບໍລິການ** | **4** | **16,360** | **17,227** |
| **4** | **ລາຍຈ່າຍຄ່າທຳນຽມ ແລະ ການບໍລິການ** | **4** | **(1,671)** | **(1,215)** |
| **5** | **ກຳໄລສຸດທິຈາກເງິນຕາຕ່າງປະເທດ** | **5** | **11,049** | **15,724** |
| **II.** | **ລາຍຮັບສຸດທິຈາກການດຳເນີນງານ** | | **63,105** | **65,654** |
| **ຂ.** | **ລາຍຮັບ ແລະ ລາຍຈ່າຍອື່ນໆ** | | | |
| **6** | **ລາຍຮັບຈາກການດຳເນີນງານອື່ນໆ** | **6** | **3,868** | **4,468** |
| **7** | **ລາຍຈ່າຍບໍລິຫານ** | | **(49,311)** | **(39,924)** |
| 7.1 | ເງິນເດືອນ ແລະ ລາຍຈ່າຍອື່ນໆທີ່ກ່ຽວກັບພະນັກງານ | 7 | (33,954) | (27,634) |
| 7.2 | ລາຍຈ່າຍບໍລິຫານອື່ນໆ | 8 | (15,357) | (12,290) |
| **8** | **ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | | **(10,090)** | **(10,663)** |
| **9** | **ລາຍຈ່າຍການດຳເນີນງານອື່ນໆ** | **9** | **(21,723)** | **(1,012)** |
| **10** | **ລາຍຈ່າຍເງິນແຮສຸດທິສຳລັບການສູນເສຍສິນເຊື່ອ** | **13.2** | **308** | **(9,180)** |
| **III.** | **ລວມກຳໄລກ່ອນອາກອນ** | | **(13,843)** | **9,343** |
| **11** | **ອາກອນກຳໄລພາຍໃນປີ** | | **2,751** | **(2,183)** |
| 11.1 | ລາຍຈ່າຍອາກອນກຳໄລພາຍໃນປີ | 20.2 | - | (2,183) |
| 11.2 | ລາຍຮັບທາງອາກອນລໍຖ້າຊຳລະສະສາງ | 20.3 | 2,751 | - |
| **IV.** | **ກຳໄລຫຼັງອາກອນ** | | **(11,092)** | **7,160** |

ກະກຽມໂດຍ:

ທ່ານ Hoang Thanh Lam
ຫົວໜ້າບັນຊີ-ບໍລິຫານ

ກວດກາໂດຍ:

ທ່ານ ນາງ Oulayphone Songeun
ຮອງຜູ້ອຳນວຍການໃຫຍ່

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
4 ເມສາ 2023

## ໃບລາຍງານຖານະການເງິນ

ນະວັນທີ 31 ທັນວາ 2022

| ລຳດັບ | ຊັບສິນ | ບົດອະທິບາຍ ເລກທີ | 31\|12\|2022 ລ້ານກີບ | 31\|12\|2021 ລ້ານກີບ |
|---|---|---|---|---|
| I | **ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ("ທຫລ")** | **10** | **415,906** | **492,334** |
| 1 | ເງິນສົດໃນຄັງ | | 29,992 | 28,824 |
| 2 | ເງິນຝາກຢູ່ ທຫລ | | 385,914 | 463,510 |
| II | **ໜີ້ຕ້ອງຮັບຈາກທະນາຄານ ແລະ ສະຖາບັນການເງິນອື່ນ** | **11** | **577,647** | **632,096** |
| 1 | ເງິນຝາກກະແສລາຍວັນ | 11.1 | 397,481 | 566,401 |
| 2 | ເງິນຝາກມີກຳນົດ | 11.2 | 180,166 | 65,695 |
| III | **ການລົງທຶນໃນຫຼັກຊັບ** | **12** | 95,121 | **9,161** |
| IV | **ເງິນກູ້ໃຫ້ແກ່ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບການສູນເສຍສິນເຊື່ອ** | **13** | **1,040,998** | **979,303** |
| V | **ຊັບສົມບັດຄົງທີ່** | | **94,348** | 87,861 |
| 1 | ຊັບສິນພວມຊື້ພວມກໍ່ສ້າງ | 14.1 | 353 | 57 |
| 2 | ຊັບສົມບັດຄົງທີ່ບໍ່ມີຕົວຕົນ | 14.2 | 16,390 | 15,855 |
| 3 | ຊັບສົມບັດຄົງທີ່ມີຕົວຕົນ | 14.3 | 72,006 | 65,298 |
| 4 | ສິດໃນການນຳໃຊ້ຊັບສິນ | 14.4 | 5,599 | 6,651 |
| VI | **ຊັບສິນອື່ນໆ** | | **34,350** | **26,764** |
| 1 | ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ | 15 | 10,042 | 14,478 |
| 2 | ອາກອນມອບລ່ວງໜ້າ | 20.1 | 555 | 130 |
| 3 | ຊັບສິນທາງອາກອນລໍຖ້າຊຳລະສະສາງ | 20.3 | 2,751 | |
| 4 | ຊັບສິນອື່ນໆ | 16 | 21,002 | 12,156 |
| | **ລວມຊັບສິນ** | | **2,258,370** | **2,227,519** |

## ໃບລາຍງານຖານະການເງິນ (ຕໍ່)

ນະວັນທີ 31 ທັນວາ 2022

| ລຳດັບ | ໜີ້ສິນ ແລະ ທຶນ | ບົດອະທິບາຍ ເລກທີ | 31\|12\|2022 ລ້ານກີບ | 31\|12\|2021 ລ້ານກີບ |
|---|---|---|---|---|
| I | **ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນ** | **17** | **746,662** | **761,843** |
| 1 | ເງິນຝາກກະແສລາຍວັນ | | 180,842 | 231,119 |
| 2 | ເງິນຝາກມີກຳນົດ | | 565,820 | 530,724 |
| II | **ໜີ້ຕ້ອງສົ່ງໃຫ້ລູກຄ້າ** | **18** | **936,165** | **1,066,354** |
| 1 | ເງິນຝາກກະແສລາຍວັນ | | 91,738 | 96,632 |
| 2 | ເງິນຝາກປະຢັດ ແລະ ເງິນຝາກມັດຈຳ | | 86,622 | 61,861 |
| 3 | ເງິນຝາກມີກຳນົດ | | 755,384 | 904,986 |
| 4 | ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ | | 2,421 | 2,875 |
| III | **ໜີ້ສິນອື່ນໆ** | | **73,018** | **46,048** |
| 1 | ດອກເບ້ຍຄ້າງຈ່າຍ | 19 | 33,287 | 33,504 |
| 2 | ໜີ້ສິນຕາມສັນຍາເຊົ່າ | 14.4 | 7,837 | 7,297 |
| 3 | ອາກອນຄ້າງຈ່າຍ | 20.1 | - | - |
| 4 | ໜີ້ສິນອື່ນໆ | 21 | 31,894 | 5,247 |
| | **ລວມໜີ້ສິນ** | | **1,755,845** | **1,874,245** |
| IV | **ທຶນ ແລະ ເງິນແຮ** | | | |
| 1 | ທຶນຈົດທະບຽນທີ່ຖອກແລ້ວ | | 477,131 | 317,131 |
| 2 | ຄັງສະສົມຕາມລະບຽບການ | | 10,220 | 10,220 |
| 3 | ເງິນແຮທົ່ວໄປສຳລັບເງິນກູ້ປົກກະຕິ | 13.2 | 5,038 | 4,695 |
| 4 | ເງິນແຮທົ່ວໄປຂອງທະນາຄານ | | - | 4,083 |
| 5 | ກຳໄລສະສົມ | | 10,136 | 17,145 |
| | **ລວມທຶນ** | | **502,525** | **353,274** |
| | **ລວມຍອດໜີ້ສິນ ແລະ ທຶນ** | | **2,258,370** | **2,227,519** |

## ໃບລາຍງານຖານະການເງິນ (ຕໍ່)

ນະວັນທີ 31 ທັນວາ 2022

| ລຳດັບ | ລາຍການນອກໃບລາຍງານຖານະທາງການເງິນ | ບົດອະທິບາຍ ເລກທີ | ຍອດເຫຼືອທ້າຍປີ ລ້ານກີບ | ຍອດຕົ້ນປີ ລ້ານກີບ |
|---|---|---|---|---|
| I | **ຄຳໝັ້ນສັນຍາ** | | **77,374** | **70,857** |
| 1 | ຄຳໝັ້ນສັນຍາການຄໍ້າປະກັນທີ່ໄດ້ໃຫ້ກັບລູກຄ້າ | | 77,374 | 70,857 |
| | **ລວມຍອດຄຳໝັ້ນສັນຍາທີ່ໄດ້ໃຫ້** | | **77,374** | **70,857** |
| II | **ຫຼັກຊັບຄໍ້າປະກັນ ແລະ ຈຳນອງ** | | | |
| ກ | **ຫຼັກຊັບຄໍ້າປະກັນ ແລະ ຈຳນອງສຳລັບເງິນກູ້** | | **3,301,632** | **3,117,771** |
| 1 | ຫຼັກຊັບຄໍ້າປະກັນ ແລະ ຈຳນອງສຳລັບເງິນກູ້ໃຫ້ລູກຄ້າ | | 3,301,632 | 3,117,771 |
| ຂ | **ຫຼັກຊັບຄໍ້າປະກັນ ແລະ ໜັງສືຄໍ້າປະກັນ** | | **66,785** | **64,144** |
| 1 | ຫຼັກຊັບຄໍ້າປະກັນ ແລະ ໜັງສືຄໍ້າປະກັນສຳລັບລູກຄ້າ | | 66,785 | 64,144 |
| | **ລວມຫຼັກຊັບຄໍ້າປະກັນ ແລະ ຈຳນອງ** | | **3,368,417** | **3,181,915** |

ກະກຽມໂດຍ:

ທ່ານ Hoang Thanh Lam
ຫົວໜ້າບັນຊີ-ບໍລິຫານ

ກວດກາໂດຍ:

ທ່ານ ນາງ Oulayphone Songeun
ຮອງຜູ້ອຳນວຍການໃຫຍ່

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ
4 ເມສາ 2023



## ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

| | ທຶນຈົດທະບຽນ ທີ່ຖອກແລ້ວ (ລ້ານກີບ) | ຄັງສະສົມ ຕາມລະບຽບການ ລ້ານກີບ | ເງິນແຮທົ່ວໄປ ສຳລັບເງິນກູ້ປົກກະຕິ ລ້ານກີບ | ເງິນແຮທົ່ວໄປ ຂອງທະນາຄານ ລ້ານກີບ | ກຳໄລສະສົມ ລ້ານກີບ | ລວມ (ລ້ານກີບ) |
|---|---|---|---|---|---|---|
| **ຍອດເຫຼືອນະວັນທີ 1 ມັງກອນ 2021** | **317,131** | **9,504** | **4,862** | **4,083** | **10,701** | **346,281** |
| ກຳໄລສຸດທິໃນປີ | - | - | - | - | 7,160 | 7,160 |
| ຄັງສະສົມຕາມລະບຽບການພາຍໃນປີ | - | 716 | - | - | (716) | - |
| ເງິນແຮທົ່ວໄປສຸດທິພາຍໃນປີ | - | - | (247) | - | - | (247) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | - | 80 | - | - | 80 |
| **ຍອດເຫຼືອນະວັນທີ 1 ມັງກອນ 2022** | **317,131** | **10,220** | **4,695** | **4,083** | **17,145** | **353,274** |
| ກຳໄລສຸດທິໃນປີ | - | - | - | - | (11,092) | (11,092) |
| ປ່ຽນແປງຄັງແຮທົ່ວໄປ | - | - | - | (4,083) | 4,083 | - |
| ຄັງສະສົມຕາມລະບຽບການພາຍໃນປີ | 160,000 | - | - | - | - | 160,000 |
| ເງິນແຮທົ່ວໄປສຸດທິພາຍໃນປີ | - | - | 20 | - | - | 20 |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | - | - | 323 | - | - | 323 |
| **ຍອດເຫຼືອນະ 31 ທັນວາ 2022** | **477,131** | **10,220** | **5,038** | **-** | **10,136** | **502,525** |

ກະກຽມໂດຍ:

ທ່ານ Hoang Thanh Lam
ຫົວໜ້າບັນຊີ-ບໍລິຫານ

ກວດກາໂດຍ:

ທ່ານ ນາງ Oulayphone Songeun
ຮອງຜູ້ອຳນວຍການໃຫຍ່

ອະນຸມັດໂດຍ:

ທ່ານ Pham Quang Phu
ຜູ້ອຳນວຍການໃຫຍ່

## ໃບລາຍງານກະແສເງິນສົດ

ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

| ລາຍການ | ບົດອະທິບາຍ ເລກທີ | ປີປັດຈຸບັນ ລ້ານກີບ | ປີຜ່ານມາ ລ້ານກີບ |
|---|---|---|---|
| **ກິດຈະກຳການດຳເນີນງານ** | | | |
| **(ຂາດທຶນ)/ກຳໄລສຸດທິກ່ອນອາກອນ:** | | **(13,843)** | **9,343** |
| **ດັດແກ້ສຳລັບ:** | | | |
| **ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | | **10,090** | **10,663** |
| **ລາຍຈ່າຍເງິນແຮສຳລັບການເສຍສິນເຊື່ອ** | 13.2 | **(716)** | **8,237** |
| **ລາຍຮັບດອກເບ້ຍ** | | **(104,566)** | **(109,523)** |
| **ລາຍຈ່າຍດອກເບ້ຍ** | | **67,199** | **75,605** |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນໃນການດຳເນີນງານ** | | **(41,836)** | **(5,675)** |
| ຫຼຸດລົງ/(ເພີ່ມຂຶ້ນ)ໃນຊັບສິນຈາກການດຳເນີນງານ | | | |
| ຍອດເຫຼືອຈາກສະຖາບັນການເງິນ | | (114,471) | 170,853 |
| ການລົງທຶນໃນຫຼັກຊັບ | | (85,960) | (9,161) |
| ເງິນກູ້ໃຫ້ແກ່ລູກຄ້າ | | (60,960) | 26,129 |
| ຊັບສິນອື່ນໆ | | (9,245) | (8,104) |
| (ຫຼຸດລົງ)/ເພີ່ມຂຶ້ນຂອງໜີ້ສິນຈາກການດຳເນີນງານ | | | |
| ໜີ້ຕ້ອງສົ່ງລູກຄ້າ | | (130,190) | 199,049 |
| ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນ | | (175,180) | 198,169 |
| ໜີ້ສິນອື່ນໆ | | 27,395 | 8,509 |
| ດອກເບ້ຍທີ່ໄດ້ຮັບ | | 109,003 | 113,169 |
| ດອກເບ້ຍທີ່ໄດ້ຊຳລະ | | (67,417) | (67,214) |
| ອາກອນທຸລະກິດຊຳລະພາຍໃນປີ | 20.2 | (206) | (3,194) |
| **ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **(549,067)** | **622,530** |
| **ກິດຈະກຳດ້ານການລົງທຶນ** | | | |
| ຊັບສິນພວມກໍ່ສ້າງ | | (554) | - |
| ຊື້ຊັບສິນຄົງທີ່ | 14.2 | (15,727) | **(396)** |
| ການສະສາງຊັບສິນຄົງທີ່ | 14.2 | - | **381** |
| **ກະແສເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກຳການລົງທຶນ** | | **(16,281)** | **(15)** |
| **ກິດຈະກຳທາງດ້ານການເງິນ** | | | |
| ເພີ່ມທຶນຈົດທະບຽນ | | 160,000 | - |
| **ກະແສເງິນສົດສຸດທິໃຊ້ໃນກິດຈະກຳທາງດ້ານການເງິນ** | | **160,000** | - |
| **ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດພາຍໃນປີ** | | **(405,348)** | **622,515** |
| **ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນປີ** | | **1,058,730** | **436,215** |
| **ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍປີ** | **22** | **653,382** | **1,058,730** |

| ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ Hoang Thanh Lam | ທ່ານ ນາງ Oulayphone Songeun | ທ່ານ Pham Quang Phu |
| ຫົວໜ້າບັນຊີ-ບໍລິຫານ | ຮອງຜູ້ອຳນວຍການໃຫຍ່ | ຜູ້ອຳນວຍການໃຫຍ່ |





## 1. ຂໍ້ມູນກ່ຽວກັບທະນາຄານ

### ການກໍ່ຕັ້ງ ແລະ ການດຳເນີນທຸລະກິດ

ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ ("ທະນາຄານ") ເບື້ອງຕົ້ນແມ່ນສ້າງເປັນສາຂາຂອງທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ ("ຊາຄອມແບັງ") ເຊິ່ງເປັນທະນາຄານທີ່ດຳເນີນທຸລະກິດໃນປະເທດຫວຽດນາມ. ທະນາຄານດຳເນີນທຸລະກິດພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 55 ອອກໃຫ້ໂດຍ ທະນາຄານແຫ່ງ ສປປ ລາວ ລົງວັນທີ 9 ທັນວາ 2008.

ໃນວັນທີ 1 ສິງຫາ 2015, ສະຖານະພາບທາງກົດໝາຍຂອງທະນາຄານຖືກປ່ຽນຮູບແບບເປັນ ບໍລິສັດຈຳກັດເອກະຊົນ ທີ່ຊາຄອມແບັງເປັນເຈົ້າຂອງທັງໝົດຕາມການອະນຸມັດຂອງ ທຫລ ພາຍໃຕ້ໃບອະນຸຍາດດຳເນີນທຸລະກິດທະນາຄານເລກທີ 15 ລົງວັນທີ 9 ມິຖຸນາ 2014. ໃນວັນທີ 13 ທັນວາ 2021, ທະນາຄານໄດ້ຮັບໃບອະນຸຍາດດຳເນີນທຸລະກິດການທະນາຄານສະບັບລ່າສຸດເລກທີ 07 ແລະ ໃບອະນຸຍາດດຳເນີນທຸລະກິດສະບັບປັບປຸງເລກທີ 2095/ຈທວ, ລົງວັນທີ 23 ທັນວາ 2021.

ກິດຈະກຳຫຼັກຂອງທະນາຄານແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການທາງການເງິນອື່ນໆໃນ ສປປ ລາວ.

### ທຶນຈົດທະບຽນທີ່ໄດ້ຖອກແລ້ວ

ນະວັນທີ 31 ທັນວາ 2022, ທຶນຈົດທະບຽນທີ່ໄດ້ຖອກແລ້ວຂອງທະນາຄານແມ່ນ 477,130,539,793 ກີບ (ນະວັນທີ 31 ທັນວາ 2021 ແມ່ນ 317,130,539,793 ກີບ).

### ທີ່ຕັ້ງ

ທະນາຄານຕັ້ງຢູ່ ຖະໜົນແຫ່ງບຸນ ເລກທີ 044, ບ້ານຫາຍໂສກ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ ແລະ ມີສາຂາທັງໝົດ 5 ສາຂາ ນະວັນທີ 31 ທັນວາ 2022.

### ພະນັກງານ

ພະນັກງານ ທັງໝົດຂອງທະນາຄານ ນະວັນທີ 31 ທັນວາ 2022 ແມ່ນ 201 ຄົນ (31 ທັນວາ 2021: 202 ຄົນ)

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ

### 2.1 ບົດຖະແຫຼງການໃນການປະຕິບັດ

ຄະນະບໍລິຫານການການຢັ້ງຢືນວ່າ ເອກະສານລາຍງານການເງິນແມ່ນຖືກສ້າງຂຶ້ນ ໂດຍສອດຄ່ອງກັບກົດໝາຍການບັນຊີແຫ່ງ ສປປ ລາວ ແລະ ລະບຽບການທີ່ອອກໂດຍທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ.

### 2.2 ພື້ນຖານໃນການກະກຽມ

ທະນາຄານບັນທຶກບັນຊີເປັນເງິນກີບ ແລະ ໄດ້ສ້າງເອກະສານລາຍງານການເງິນເປັນຫົວໜ່ວຍກີບ ("ລ້ານກີບ") ໂດຍອີງຕາມດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000 ແລະ ກົດໝາຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ກຳນົດໃຊ້ໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ໄດ້ຖືກສ້າງໂດຍນຳໃຊ້ ຫຼັກການ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບໃນ ສປປ ລາວ. ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານ ແມ່ນບໍ່ໄດ້ສ້າງຂຶ້ນສຳລັບບຸກຄົນທີ່ບໍ່ໄດ້ຮັບຮູ້ກ່ຽວ ກັບຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດການບັນຊີຂອງ ສປປ ລາວ ແລະ ບໍ່ໄດ້ມີຈຸດປະສົງນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດບົນພື້ນຖານຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຖືກຍອມຮັບໂດຍທົ່ວໄປໃນປະເທດອື່ນນອກເໜືອຈາກ ສປປ ລາວ.

ປີການບັນຊີຂອງທະນາຄານແມ່ນເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.





## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.3 ການປ່ຽນແປງນະໂຍບາຍການບັນຊີ ແລະ ການເປີດເຜີຍ

ນະໂຍບາຍການບັນຊີທີ່ຮັບຮອງໂດຍທະນາຄານສຳລັບການກະກຽມບົດລາຍງານການເງິນເຫຼົ່ານີ້ແມ່ນສອດຄ່ອງກັບນະໂຍບາຍທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ ສຳລັບປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2021.

### 2.4 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ລາຍຮັບ ແລະ ລາຍຈ່າຍດອກເບ້ຍໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການແບບຄ້າງຮັບຄ້າງຈ່າຍທີ່ນຳໃຊ້ວິທີການຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍທີ່ຖືກກຳນົດໄວ້ໃນສັນຍາເງິນກູ້ ແລະ ເງິນຝາກຂອງລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ກາຍເປັນໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍເລກທີ 2.8 ນິຍາມຂອງເງິນກູ້ບໍ່ເກີດດອກອອກຜົນ) ຫຼື ເມື່ອຜູ້ບໍລິຫານ ເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະຄືນໄດ້ທັງຕົ້ນທຶນ ແລະ ດອກເບ້ຍ. ລາຍຮັບດອກເບ້ຍເງິນກູ້ດັ່ງກ່າວແມ່ນໄດ້ຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບເງິນຕົວຈິງ.

### 2.5 ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ

ຄ່າທຳນຽມ ແລະ ຄ່າບໍລິການ ແມ່ນປະກອບດ້ວຍບັນດາຄ່າທຳນຽມທີ່ໄດ້ຮັບຈາກການໂອນເງິນ (ລວມທັງການຊຳລະສະສາງທາງການຄ້າ), ຄ່າທຳນຽມທີ່ເກີດຂຶ້ນສຳລັບບັນດາທຸລະກຳການແລກປ່ຽນເງິນຕາຕ່າງປະເທດ, ແລະ ຄ່າທຳນຽມທີ່ເກີດຂຶ້ນຈາກການຄໍ້າປະກັນທາງການເງິນ.

ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານອີງຕາມຫຼັກການເງິນສົດ.

### 2.6 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີເງິນສົດ ແລະ ການລົງທຶນໄລຍະສັ້ນທີ່ມີສະພາບຄ່ອງສູງໂດຍມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໃນຈຳນວນທີ່ຮູ້ໄດ້ ແລະ ບັນຊີໜີ້ຕ້ອງຮັບຈາກທະນາຄານອື່ນທີ່ມີອາຍຸຄົບກຳນົດຕໍ່າກວ່າ 30 ວັນ.

### 2.7 ເງິນໃຫ້ກູ້ຢືມໃຫ້ແກ່ລູກຄ້າ

ເງິນໃຫ້ກູ້ຢືມໃຫ້ແກ່ລູກຄ້າ ແມ່ນຖືກຮັບຮູ້ຕາມຕົ້ນທຶນ ແລະ ສະແດງຍອດຄ້າງຊຳລະລົບໃຫ້ເງິນແຮສະເພາະສຳລັບເງິນກູ້ຢືມທີ່ບໍ່ເກີດດອກອອກຜົນ.

### 2.8 ການຈັດຊັ້ນເງິນກູ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ

#### ການຈັດຊັ້ນເງິນກູ້

ອີງຕາມຂໍ້ຕົກລົງເລກທີ 512/ທຫລ ("ທຫລ 512")ໂດຍທະນາຄານແຫ່ງ ສປປ ລາວ ລົງວັນທີ 29 ມິຖຸນາ 2018 ແລະ ຄຳແນະນຳຈັດຕັ້ງປະຕິບັດເລກທີ 898/ກຄທທ ("ທຫລ 898") ລົງວັນທີ 14 ພະຈິກ 2018, ທະນາຄານ ຈັດຊັ້ນເປັນເງິນກູ້ເປັນ 5 ກຸ່ມ ອີງຕາມການຊຳລະຄືນດອກເບ້ຍ ແລະ ປັດໄຈທາງດ້ານຄຸນນະພາບອື່ນໆ. ເງິນກູ້ທີ່ຖືກຈັດປະເພດເປັນໜີ້ປົກກະຕິ (ກຸ່ມ A) ຫຼື ໜີ້ຄວນເອົາໃຈໃສ່ (ກຸ່ມ B) ຈະຖືກພິຈາລະນາເປັນເງິນກູ້ທີ່ເກີດດອກອອກຜົນ. ເງິນກູ້ທີ່ຖືກຈັດຊັ້ນເປັນໜີ້ຕໍ່າກວ່າມາດຕະຖານ (ກຸ່ມ C) ຫຼື ສົງໄສ (ກຸ່ມ D) ແລະ ໜີ້ສູນ (ກຸ່ມ E) ແມ່ນໄດ້ຖືກພິຈາລະນາເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ.

ສຳລັບເງິນກູ້ທີ່ກ່ຽວຂ້ອງກັບໂຄງການພັດທະນາພື້ນຖານໂຄງຮ່າງຈາກລັດຖະບານ, ທີ່ຄ້າງຊຳລະແຕ່ການຄ້າງຊຳລະດັ່ງກ່າວແມ່ນຢູ່ພາຍໃນກຳນົດເວລາຂອງລັດຖະບານ, ທະນາຄານແມ່ນໄດ້ຮັບອະນຸຍາດໃຫ້ຈັດຊັ້ນໜີ້ເປັນໜີ້ຄວນເອົາໃຈໃສ່ ອີງຕາມ ແຈ້ງການເລກທີ 172/ທຫລ ວັນທີ 15 ພຶດສະພາ 2017 ອອກໂດຍ ທະນາຄານແຫ່ງ ສປປ ລາວ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.8 ການຈັດຊັ້ນເງິນກູ້ ແລະ ເງິນແຮສຳລັບກິດຈະກຳສິນເຊື່ອ(ຕໍ່)

ພ້ອມກັນນັ້ນທາງທະນາຄານຍັງໄດ້ນຳໃຊ້ຂໍ້ຕົກລົງ ເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ບົດແນະນຳ ສະບັບເລກທີ 249/ທຫລ ລົງວັນທີ 11 ພຶດສະພາ 2020 ໂດຍທະນາຄານແຫ່ງ ສປປ ລາວ ກ່ຽວກັບການປັບປຸງໂຄງສ້າງໜີ້, ການຂະຫຍາຍ ແລະ ການຮັກສາການຈັດຊັ້ນເງິນກູ້ ເພື່ອຊ່ວຍລູກໜີ້ທີ່ໄດ້ຮັບກະທົບຈາກການແຜ່ລະບາດຂອງພະຍາດ Covid-19. ດັ່ງນັ້ນ, ທະນາຄານຈຶ່ງໄດ້ປັບໂຄງສ້າງເງິນກູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ຮັກສາການຈັດເງິນກູ້ໄວ້ຄືເກົ່າ ກ່ອນວັນທີ 01 ມັງກອນ 2020.

**ຄັງເງິນແຮ**

ອີງຕາມຂໍ້ຕົກລົງ ເລກທີ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດ ເລກທີ 898, ທະນາຄານສ້າງຄັງແຮເງິນກູ້ຕາມການຈັດຊັ້ນໜີ້ ດັ່ງລຸ່ມນີ້:

| ກຸ່ມ | ອັດຕາສ່ວນເງິນແຮ | ປະເພດຄັງເງິນແຮ (i) | ການບັນຊີສຳລັບຍອດເຫຼືອເງິນແຮ (ii) | ການບັນຊີສຳລັບ ສ່ວນປ່ຽນແປງໃນຍອດເຫຼືອເງິນແຮ (iii) |
|---|---|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ | | | | |
| A | 0.5% | ຄັງເງິນແຮທົ່ວໄປ | ໃນສ່ວນທຶນເຈົ້າຂອງ | ລາຍຈ່າຍ/ລາຍຮັບອື່ນໆ |
| B | 3.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ລາຍຈ່າຍ/ລາຍຮັບອື່ນໆ |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ | | | | |
| C | 20.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| D | 50.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |
| E | 100.0% | ຄັງເງິນແຮສະເພາະ | ຫັກອອກຍອດເຫຼືອເງິນກູ້ | ເງິນແຮສຸດທິສຳລັບ ໜີ້ NPL |

(i) ຈຳນວນເງິນແຮແມ່ນຖືກຄິດໄລ່ດ້ວຍສູດຄິດໄລ່ດັ່ງລຸ່ມນີ້:

ກ. ຄັງແຮທົ່ວໄປສຳລັບເງິນກູ້ = ອັດຕາເງິນແຮ x ຍອດເງິນກູ້ທີ່ຍັງເຫຼືອ

ຂ. ຄັງເງິນແຮສະເພາະ = ອັດຕາເງິນແຮ x (ຍອດເງິນກູ້ທີ່ຍັງເຫຼືອ - ມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນ)

ເຊິ່ງທະນາຄານໄດ້ເລືອກທີ່ຈະລວມເອົາມູນຄ່າຫຼຸດຂອງຫຼັກຊັບຄ້ຳປະກັນເຂົ້າໃນສູດຄິດໄລ່ເງິນແຮ ດັ່ງທີ່ໄດ້ອະນຸຍາດໄວ້ໃນ ຂໍ້ຕົກລົງ ເລກທີ ທຫລ 512 ແລະ ຄຳແນະນຳຈັດຕັ້ງປະຕິບັດ 898.

(ii) ຍອດເຫຼືອເງິນແຮຂອງເງິນກູ້ທີ່ຖືກຈັດເປັນກຸ່ມ A ແມ່ນຈະຖືກບັນທຶກລົງໃນໃບລາຍງານຖານະການເງິນຢູ່ "ຄັງແຮທົ່ວໄປສຳລັບເງິນກູ້" ພາຍໃຕ້ທຶນ ແລະ ຄັງສຳຮອງຂອງທະນາຄານ.

ຍອດເຫຼືອສະສົມຂອງຄັງເງິນແຮຂອງ ເງິນກູ້ທີ່ຖືກຈັດຢູ່ໃນກຸ່ມ B ແລະ ເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນໄດ້ບັນທຶກໃນໃບລາຍງານຖານະການເງິນ ຢູ່ "ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບກິດຈະກຳສິນເຊື່ອ".

(iii) ສ່ວນປ່ຽນແປງສຳລັບເງິນແຮຂອງເງິນກູ້ທີ່ເກີດດອກອອກຜົນ ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານຢູ່ "ລາຍຈ່າຍຈາກການດຳເນີນງານອື່ນໆ" ສຳລັບລາຍຈ່າຍເງິນແຮ ແລະ "ລາຍຮັບຈາກການດຳເນີນງານອື່ນໆ" ສຳລັບການເກັບຄືນລາຍຈ່າຍເງິນແຮ.

ສ່ວນປ່ຽນແປງສຳລັບເງິນແຮຂອງ ເງິນກູ້ທີ່ບໍ່ເກີດດອກອອກຜົນ ແມ່ນຖືກບັນທຶກໃນໃບລາຍງານຜົນການດຳເນີນງານ ຢູ່ "ລາຍຈ່າຍ/(ເກັບຄືນ)ເງິນແຮສຸດທິ ໄວ້ເງິນແຮສຳລັບເງິນກູ້ທີ່ບໍ່ເກີດດອກອອກຜົນ".





## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.9 ການລົງທຶນໃນຫຼັກຊັບ

**ຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ**

ການລົງທຶນໃນຫລັກຊັບທີ່ຈະຖືໄວ້ຈົນຄົບກຳນົດແມ່ນຫລັກຊັບໜີ້ທີ່ມີກຳນົດ ຫລື ການຊຳລະທີ່ມີກຳນົດ ແລະ ມື້ຄົບກຳນົດ ເຊິ່ງທະນາຄານມີຄວາມປະສົງ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອສ້າງຜົນໄດ້ຮັບດອກເບ້ຍ. ຫລັກຊັບເຫລົ່ານັ້ນຖືກກຳນົດມູນຄ່າ ແລະ ມື້ຄົບກຳນົດ. ເມື່ອມັນຖືກຂາຍກ່ອນມື້ຄົບກຳນົດຫລັກຊັບເຫລົ່ານັ້ນຈະຖືກຈັດຊັ້ນເປັນຫລັກຊັບການຄ້າ ຫລື ຫລັກຊັບພ້ອມທີ່ຈະຂາຍ.

ຫລັກຊັບທີ່ຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ເປັນມູນຄ່າ ແລະ ສະແດງອອກເປັນມູນຄ່າ. ຄ່າເບ້ຍປະກັນແມ່ນຕັດບັນຊີສ່ວນເກີນ ແລະ ສ່ວນຫຼຸດຈາກການຊື້ຫຼັກຊັບໃນງົບກຳໄລຂາດທຶນ ໂດຍໃຊ້ວິທີແບບສະເໝີຕົວ ກວມລວມເອົາປີທີ່ຊື້ຫຼັກຊັບຈົນຮອດມື້ຄົບກຳນົດ.

ເປັນແຕ່ລະໄລຍະ, ຫລັກຊັບທີ່ຖືໄວ້ຈົນຄົບກຳນົດ ແມ່ນຂຶ້ນກັບການທົບທວນຄືນການເຊື່ອມມູນຄ່າ. ຄັງແຮຄ່າເສື່ອມຂອງຫລັກຊັບເຫລົ່ານັ້ນ ແມ່ນກຳນົດຂຶ້ນເມື່ອເຫັນວ່າມູນຄ່າຍຸດຕິທຳຕ່ຳກວ່າມູນຄ່າເດີມຫລາຍ ຫລື ຕໍ່ເນື່ອງເປັນເວລາຍາວນານ. ຄັງແຮຄ່າເສື່ອມແມ່ນໄດ້ຖືກຮັບຮູ້ເປັນ "ກຳໄລ/(ຂາດທຶນ) ຈາກການລົງທຶນໃນ ຫລັກຊັບ" ໃນໃບລາຍງານຜົນການດຳເນີນງານ.

### 2.10 ຊັບສິນບັດຄົງທີ່

ຊັບສິນບັດຄົງທີ່ລວມມີຊັບສິນບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ. ຊັບສິນບັດຄົງທີ່ມີຕົວຕົນປະກອບມີ: ອາຄານ ແລະ ການປັບປຸງ, ເຄື່ອງໃຊ້ຫ້ອງການ, ພາຫະນະ ແລະ ເຟີນີເຈີ ແລະ ເຄື່ອງຕົບແຕ່ງ. ຊັບສິນບັດຄົງທີ່ບໍ່ມີຕົວຕົນປະກອບມີ: ຊອບແວຄອມພິວເຕີ ແລະ ສິດນຳໃຊ້ທີ່ດິນ.

ຊັບສິນບັດຄົງທີ່ໄດ້ຖືກລາຍງານຕາມຕົ້ນທຶນ ລົບໃຫ້ ຄ່າຫຼູ້ຍຫ້ຽນສະສົມ ຫຼື ຄ່າເສື່ອມສະສົມ, ຖ້າມີ.

ຕົ້ນທຶນຂອງຊັບສິນບັດປະກອບດ້ວຍ ມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆ ໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.

ບັນດາຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸ ຈະຖືກຈົດເຂົ້າເປັນທຶນ ແລະ ລາຍຈ່າຍສຳລັບຄ່າບຳລຸງຮັກສາ ແລະ ສ້ອມແປງ ຈະຖືກຈົດເຂົ້າ ແລະ ສະແດງຢູ່ໃນບົດລາຍງານຜົນໄດ້ຮັບ.

ເມື່ອຊັບສິນບັດຖືກຂາຍ ຫຼື ສະສາງອອກ, ຕົ້ນທຶນ ແລະ ຄ່າຫຼູ້ຍຫ້ຽນສະສົມຈະຖືກຍ້າຍອອກຈາກໃບລາຍງານຖານະທາງການເງິນ ແລະ ສ່ວນຕ່າງຈາກກຳໄລ ຫຼື ຂາດທຶນຈາກການສະສາງຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

### 2.11 ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມຊັບສິນບັດຄົງທີ່

ການຫັກຄ່າຫຼູ້ຍຫ້ຽນ ແລະ ການຫັກຄ່າເສື່ອມຂອງຊັບສິນບັດຄົງທີ່ແມ່ນຖືກຄິດໄລ່ດ້ວຍວິທີເສັ້ນຊື່ດ້ວຍອັດຕາທີ່ກຳນົດຕາມອາຍຸການນຳໃຊ້ທີ່ຄາດຄະເນໂດຍສອດຄ່ອງກັບກົດໝາຍສ່ວຍສາອາກອນຂອງລາວສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ນັບແຕ່ ຫຼື ພາຍຫຼັງວັນທີ 01 ມັງກອນ 2020 ອອກໂດຍປະທານສະພາແຫ່ງຊາດ. ອັດຕາປະຈຳປີທີ່ນຳໃຊ້ມີດັ່ງລຸ່ມນີ້:

| | |
|---|---|
| ອາຄານ ແລະ ສິ່ງປັບປຸງ | 5% |
| ອຸປະກອນສຳນັກງານ | 20% |
| ພາຫະນະ | 20% |
| ຊັບສິນບັດທີ່ມີຕົວຕົນອື່ນໆ | 20% |
| ຊອບແວ | 20% |

ສິດນຳໃຊ້ທີ່ດິນທີ່ທະນາຄານຊື້ມາມີອາຍຸການນຳໃຊ້ທີ່ບໍ່ມີກຳນົດ ແມ່ນຖືກລາຍງານໃນມູນຄ່າຕົ້ນທຶນ ແລະ ບໍ່ໄດ້ຫັກຄ່າເສື່ອມ. ຄ່າໃຊ້ຈ່າຍເບື້ອງຕົ້ນຂອງສິດນຳໃຊ້ທີ່ດິນປະກອບມີ ລາຄາຊື້ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນຊຶ່ງສົ່ງຜົນໂດຍກົງກັບການຮັບປະກັນສິດນຳໃຊ້ທີ່ດິນ.

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.12 ສັນຍາເຊົ່າ

**ສິດໃນການນໍາໃຊ້ຊັບສິນ**

ເມື່ອເລີ່ມຕົ້ນເຮັດສັນຍາ, ທະນາຄານຈະປະເມີນການຈັດສັນຍາເຊົ່າ ຫຼື ອີງໃສ່ສັນຍາການເຊົ່າທີ່ເຮັດໃຫ້ຜູ້ຊົມໃຊ້ (ຜູ້ເຊົ່າ) ມີສິດຄວບຄຸມການນໍາໃຊ້ຊັບສິນທີ່ໄດ້ລະບຸໄວ້ເປັນໄລຍະເວລາໃດໜຶ່ງໃນການແລກປ່ຽນເພື່ອພິຈາລະນາ. ຖ້າສັນຍາໜຶ່ງປະກອບມີຫຼາຍກວ່າໜຶ່ງອົງປະກອບຂອງສັນຍາເຊົ່າ, ຫຼື ການປະສົມປະສານຂອງການໃຫ້ເຊົ່າ ແລະ ການບໍລິການ, ການພິຈາລະນາຈະຖືກຈັດສັນໃຫ້ແຕ່ລະປະເພດຂອງສັນຍາການເຊົ່າ ແລະ ອົງປະກອບທີ່ບໍ່ເປັນການເຊົ່າໃນການສະຫຼຸບ ແລະ ແຕ່ລະການວັດແທກຄືນໃໝ່ຂອງສັນຍາບົນພື້ນຖານລາຄາຂາຍທີ່ກ່ຽວຂ້ອງຂອງບັນດາອົງປະກອບເຫຼົ່ານັ້ນ. ທະນາຄານລວມເອົາແຕ່ລະພາກສ່ວນຂອງການໃຫ້ເຊົ່າ ແລະ ທີ່ບໍ່ແມ່ນການໃຫ້ເຊົ່າ ໃນກໍລະນີທີ່ບໍ່ສາມາດແບ່ງແຍກສ່ວນປະກອບທີ່ບໍ່ແມ່ນການໃຫ້ເຊົ່າ.

ທະນາຄານຈະຮັບຮູ້ ສິດນໍາໃຊ້ຊັບສິນທີ່ຖືກຕ້ອງໃນວັນທີ ທີ່ເລີ່ມຕົ້ນການເຊົ່າ (ຕົວຢ່າງ, ວັນທີ ທີ່ຊັບສິນພ້ອມໃຊ້ງານ). ສິດນໍາໃຊ້ຊັບສິນແມ່ນຖືກຕີມູນຄ່າດ້ວຍມູນຄ່າຕົ້ນທຶນ, ຫັກລົບໃຫ້ຄ່າຫຼູ້ຍຫ້ຽນສະສົມ ແລະ ຄ່າເສື່ອມມູນຄ່າ, ແລະ ປັບປຸງ. ສໍາລັບການຕີມູນຄ່າຄືນໃໝ່ຂອງໜີ້ສິນທີ່ເປັນການເຊົ່າ. ມູນຄ່າຕົ້ນທຶນຂອງສິດນໍາໃຊ້ຊັບສິນແມ່ນລວມເອົາຈໍານວນຂອງໜີ້ສິນທີ່ເປັນການເຊົ່າທີ່ໄດ້ຖືກດັດແກ້ສໍາລັບການຈ່າຍຄ່າເຊົ່າ ທີ່ໄດ້ປະຕິບັດໄປແລ້ວ ຫຼື ກ່ອນມື້ທີ່ເລີ່ມຕົ້ນນໍາໃຊ້, ບວກຄ່າໃຊ້ຈ່າຍທາງກົງໃນເບື້ອງຕົ້ນທີ່ເກີດຂຶ້ນ ແລະ ການຄາດຄະເນຄ່າໃຊ້ຈ່າຍໃນການຮື້ຖອນ ແລະ ເຄື່ອນຍ້າຍຊັບສິນ ຫຼື ການຟື້ນຟູຊັບສິນທີ່ຕິດພັນ ຫຼື ສະຖານທີ່ທີ່ມັນຕັ້ງຢູ່, ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ. ໄລຍະເວລາການເຊົ່າລວມເຖິງໄລຍະເວລາທີ່ກວມເອົາທາງເລືອກໃນການຂະຫຍາຍ ຖ້າຫາກວ່າກຸ່ມບໍລິສັດມີຄວາມໝັ້ນໃຈໃນການໃຊ້ທາງເລືອກນັ້ນ. ຍົກເວັ້ນ ກໍລະນີທີ່ທະນາຄານມີຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າຈະໄດ້ຮັບກໍາມະສິດໃນຊັບສິນທີ່ໃຫ້ເຊົ່າເມື່ອສິ້ນສຸດໄລຍະເວລາການເຊົ່າການຮັບຮູ້ ສິດນໍາໃຊ້ຊັບສິນໃຫ້ເປັນຄ່າຫຼູ້ຍຫ້ຽນບົນພື້ນຖານຮູບແບບການຄິດໄລ່ແບບເສັ້ນຊື່ຕາມອາຍຸການໃຊ້ງານ. ສິດໃນການນໍາໃຊ້ຊັບສິນແມ່ນຂຶ້ນກັບການປະເມີນຄ່າເສື່ອມມູນຄ່າ.

**ໜີ້ສິນຕາມສັນຍາເຊົ່າ**

ນະວັນທີ ທີ່ເລີ່ມຕົ້ນຂອງການເຊົ່າ, ທະນາຄານໄດ້ຮັບຮູ້ ໜີ້ສິນທີ່ເກີດຈາກການເຊົ່າຖືກຕີມູນຄ່າຕາມມູນຄ່າປັດຈຸບັນຂອງການຈ່າຍຄ່າເຊົ່າຕາມໄລຍະເວລາຂອງການເຊົ່າ. ການຈ່າຍຄ່າເຊົ່າແມ່ນລວມເຖິງການຈ່າຍແບບຄົງທີ່ (ລວມທັງການຈ່າຍເປັນກໍາມະສິດ) ຫັກລົບໃຫ້ລາຍຮັບທີ່ໄດ້ຈາກການເຊົ່າ, ການຈ່າຍຄ່າເຊົ່າຜັນແປ ເຊິ່ງຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ມູນຄ່າຄາດຄະເນວ່າຈະຈ່າຍພາຍໃຕ້ການຄໍ້າປະກັນມູນຄ່າທີ່ເຫຼືອ. ການຈ່າຍຄ່າເຊົ່າລວມເຖິງລາຄາການໃຊ້ສິດຂອງທາງເລືອກໃນການຊື້ທີ່ສົມເຫດສົມຜົນທີ່ທະນາຄານຈະຕ້ອງໃຊ້ ແລະ ການຈ່າຍຄ່າປັບໄໝສໍາລັບການຍົກເລີກສັນຍາຫາກໄລຍະເວລາການເຊົ່າສະທ້ອນໃຫ້ເຫັນເຖິງການໃຊ້ສິດຂອງທະນາຄານໃນການຍົກເລີກ. ຄ່າເຊົ່າຜັນແປທີ່ບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນຊ່ວງເວລາທີ່ເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດມີການຊໍາລະ.

ໃນການຄິດໄລ່ມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານນໍາໃຊ້ອັດຕາດອກເບ້ຍເງິນກູ້ຢືມສ່ວນເພີ່ມນະມື້ທີ່ເລີ່ມການເຊົ່າ ຖ້າຫາກວ່າອັດຕາດອກເບ້ຍໃນການເຊົ່າບໍ່ສາມາດຫາໄດ້ໂດຍງ່າຍ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ມູນຄ່າຂອງໜີ້ສິນທີ່ເກີດຈາກການເຊົ່າແມ່ນຖືກເພີ່ມຂຶ້ນຕາມການເພີ່ມຂຶ້ນຂອງດອກເບ້ຍ ແລະ ຫຼຸດລົງສໍາລັບຄ່າເຊົ່າທີ່ຕ້ອງຈ່າຍ. ນອກຈາກນີ້ ມູນຄ່າຕາມບັນຊີຂອງໜີ້ສິນທີ່ເກີດຈາກການເຊົ່າຈະຖືກຮັບຮູ້ ກໍຕໍ່ເມື່ອມີການປ່ຽນແປງໃນສ່ວນຂອງໄລຍະເວລາຂອງການຈ່າຍຄ່າເຊົ່າແບບຄົງທີ່ ທີ່ມີເນື້ອຫາສໍາຄັນ ຫຼື ການປ່ຽນແປງທາງດ້ານການປະເມີນເພື່ອຊື້ຊັບສິນດັ່ງກ່າວ.



ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ຕໍ່)
ນະວັນທີ ແລະ ສໍາລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

## 2. ສະຫຼຸບນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.12 ສັນຍາເຊົ່າ(ຕໍ່)

**ສັນຍາເຊົ່າໄລຍະສັ້ນ ແລະ ສັນຍາເຊົ່າຊັບສິນທີ່ມີມູນຄ່າຕໍ່າ**

ທະນາຄານນໍາໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າໄລຍະສັ້ນທີ່ມີໄລຍະເວລາ 12 ເດືອນ ຫຼື ໜ້ອຍກວ່າ ນັບແຕ່ມື້ເລີ່ມຕົ້ນ ແລະ ບໍ່ມີຕົວເລືອກໃນການຊື້. ນອກຈາກນີ້ ຍັງໃຊ້ການຍົກເວັ້ນການຮັບຮູ້ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ ມາເປັນການເຊົ່າຊັບສິນທີ່ຖືກພິຈາລະນາໃຫ້ເປັນມູນຄ່າຕໍ່າ. ການຈ່າຍຄ່າເຊົ່າ ສໍາລັບການເຊົ່າທີ່ມີໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕໍ່າ ແມ່ນຖືກຮັບຮູ້ເປັນຄ່າໃຊ້ຈ່າຍຕາມວິທີເສັ້ນຊື່ຕາມອາຍຸສັນຍາເຊົ່າ.

**ການຕັດແກ້ທີ່ສໍາຄັນໃນການກໍານົດໄລຍະສັນຍາການເຊົ່າຂອງທາງເລືອກການຕໍ່ສັນຍາຄືນໃໝ່**

ທະນາຄານໄດ້ກໍານົດໄລຍະເວລາການເຊົ່າເປັນໄລຍະເວລາທີ່ບໍ່ສາມາດຍົກເລີກສັນຍາໄດ້, ລວມທັງໄລຍະເວລາທີ່ກວມເອົາທາງເລືອກທີ່ຈະຕໍ່ອາຍຸຂອງການເຊົ່າ ຖ້າຫາກວ່າມັນມີເຫດຜົນທີ່ແນ່ນອນໃນການຈັດຕັ້ງປະຕິບັດ, ຫຼື ໄລຍະເວລາໃດໜຶ່ງທີ່ກວມເອົາທາງເລືອກທີ່ຈະຢຸດສັນຍາເຊົ່າ, ຖ້າຫາກວ່າ ມັນມີເຫດຜົນທີ່ແນ່ນອນວ່າ ບໍ່ຄວນສືບຕໍ່ເຊົ່າຕໍ່ໄປ.

ທະນາຄານນໍາໃຊ້ການຕັດສິນໃຈໃນການປະເມີນວ່າ ມີເຫດຜົນທີ່ແນ່ນອນບໍ່ ທີ່ຈະສືບຕໍ່ໃນການຕໍ່ອາຍຸສັນຍາເຊົ່າ. ນັ້ນແມ່ນການພິຈາລະນາທຸກໆປັດໄຈທີ່ກ່ຽວຂ້ອງທີ່ຈະສ້າງແຮງຈູງໃຈໃນການຕໍ່ອາຍຸສັນຍາເພື່ອດໍາເນີນທຸລະກິດ. ຫຼັງຈາກມື້ທີ່ເລີ່ມການເຊົ່າ, ທະນາຄານໄດ້ໃຫ້ການປະເມີນຄືນສັນຍາເຊົ່າ ຖ້າຫາກມີເຫດການທີ່ສໍາຄັນ ຫຼື ການປ່ຽນແປງໃນສະພາບການທີ່ຢູ່ໃນການຄວບຄຸມ ແລະ ສິ່ງຜົນກະທົບຕໍ່ຄວາມສາມາດໃນການດໍາເນີນງານ (ຫຼື ການບໍ່ດໍາເນີນງານ) ທາງເລືອກໃນການຕໍ່ສັນຍາ (ຕົວຢ່າງ ການປ່ຽນແປງຍຸດທະສາດຂອງທຸລະກິດ).

### 2.13 ຄັງສໍາຮອງຕາມລະບຽບການ

ພາຍໃຕ້ຂໍ້ກໍານົດຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ລົງວັນທີ 7 ທັນວາ 2018, ທະນາຄານທຸລະກິດໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງສໍາຮອງຕາມກໍາໄລສຸດທິໃຫ້ເໝາະສົມດັ່ງຕໍ່ໄປນີ້:

- ຄັງແຮຕາມລະບຽບການ
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ

ອີງຕາມ 156, ກົດໝາຍວ່າດ້ວຍວິສາຫະກິດ ລົງວັນທີ 26 ທັນວາ 2013, ເຊິ່ງທະນາຄານທຸລະກິດແມ່ນຕ້ອງໄດ້ມີຄັງສໍາຮອງຕາມລະບຽບການໃນອັດຕາ 10% ຂອງກໍາໄລຫຼັງຫັກອາກອນ. ເມື່ອຄັງສໍາຮອງນີ້ເຖິງ 50% ຂອງທຶນຈົດທະບຽນ, ທະນາຄານອາດຈະໃຈະຄັງແຮດັ່ງກ່າວ ເວັ້ນເສຍແຕ່ໄດ້ກໍານົດໄວ້ໃນກົດໝາຍ.

ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆຈະຖືກສ້າງຂຶ້ນຕາມມະຕິກົກລົງຂອງສະພາບໍລິຫານ.

ເນື່ອງຈາກທະນາຄານປະສົບກັບການຂາດທຶນ, ທະນາຄານຈຶ່ງບໍ່ໄດ້ສ້າງຄັງແຮຕາມລະບຽບການ ສໍາລັບປີທີ່ສິ້ນສຸດ 31 ທັນວາ 2022:

## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.14 ລາຍການເຄື່ອນໄຫວທີ່ເປັນເງິນຕາຕ່າງປະເທດ

ລາຍການທຸລະກຳທີ່ເປັນສະກຸນເງິນເດີມແມ່ນຖືກບັນທຶກໃນເບື້ອງຕົ້ນ ຕາມອັດຕາແລກປ່ຽນທັນທີນະມື້ເຮັດທຸລະກຳ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນເງິນຕາຕ່າງປະເທດນະມື້ທ້າຍປີແມ່ນໄດ້ຖືກຕີມູນຄ່າເປັນເງິນກີບຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ (ລາຍລະອຽດອັດຕາແລກປ່ຽນເງິນຕາຕ່າງປະເທດທຽບໃສ່ເງິນກີບໃນ ວັນທີ 31 ທັນວາ 2022 ໄດ້ສະແດງຢູ່ຂ້າງລຸ່ມນີ້). ສ່ວນຜິດດ່ຽງທັງໝົດທີ່ເກີດຂຶ້ນຈາກອັດຕາແລກປ່ຽນ ແມ່ນຖືກບັນທຶກເຂົ້າໃນ "ກຳໄລ/(ຂາດທຶນ)ສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ" ໃນໃບລາຍງານຜົນການດຳເນີນງານ.

ອັດຕາແລກປ່ຽນທຽບໃສ່ເງິນກີບແມ່ນມີດັ່ງລຸ່ມນີ້:

| | 31 ທັນວາ 2022<br>ກີບ | 31 ທັນວາ 2021<br>ກີບ |
|---|---|---|
| ໂດລາສະຫະລັດ ("ໂດລາ") | 17,192.00 | 11,139.00 |
| ໄທບາດ ("ບາດ") | 498.22 | 346.40 |

### 2.15 ອາກອນກຳໄລ

ການຄິດໄລ່ເງິນແຮສຳລັບເສຍອາກອນກຳໄລແມ່ນອີງຕາມກຳໄລພາຍໃນໄລຍະປັດຈຸບັນ, ເຊິ່ງອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ. ທະນາຄານມີພັນທະຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນໃໝ່ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ຫຼັງຈາກວັນທີ 1 ມັງກອນ 2020. ດັ່ງນັ້ນ, ທະນາຄານຖືກເສຍອາກອນໃນອັດຕາ 20% ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022 (2021:20%). ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະ ກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

**ອາກອນລໍຖ້າສະສາງ**

ອາກອນລໍຖ້າສະສາງແມ່ນຖືກຄິດໄລ່ຈາກສ່ວນຕ່າງຊົ່ວຄາວນະມື້ທີ່ອອກບົດລາຍງານລະຫວ່າງຖານອາກອນຂອງຊັບສິນ ແລະ ໜີ້ສິນ ແລະ ມູນຄ່າຕາມບັນຊີເພື່ອຈຸດປະສົງໃນການລາຍງານການເງິນ. ໜີ້ສິນຂອງອາກອນລໍຖ້າສະສາງຕ້ອງສົ່ງແມ່ນໄດ້ຮັບການຍອມຮັບສຳລັບຄວາມແຕກຕ່າງຊົ່ວຄາວທີ່ເສຍອາກອນທັງໝົດ, ຍົກເວັ້ນບ່ອນທີ່ມີຄວາມຮັບຜິດຊອບດ້ານໜີ້ສິນອາກອນລໍຖ້າສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ, ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ຜົນກຳໄລ ຫຼື ການຂາດທຶນ.

ຈຳນວນຊັບສິນທາງອາກອນລໍຖ້າສະສາງແມ່ນຖືກທົບທວນຄືນໃນລາຍງານແຕ່ລະມື້ ແລະ ຫຼຸດລົງໃນຂອບເຂດທີ່ວ່າມັນບໍ່ເປັນໄປໄດ້ອີກຕໍ່ໄປວ່າຜົນກຳໄລທີ່ຈະຕ້ອງເສຍອາກອນພຽງພໍເພື່ອອະນຸຍາດໃຫ້ຊັບສິນທາງອາກອນທັງໝົດ ຫຼື ສ່ວນໜຶ່ງຂອງຊັບສິນອາກອນລໍຖ້າສະສາງທີ່ເລື່ອນໄປໃຊ້. ຊັບສິນອາກອນເລື່ອນຊຳລະທີ່ບໍ່ຮັບຮູ້ຈະຖືກປະເມີນຄືນໃໝ່ໃນລາຍງານແຕ່ລະວັນ ແລະ ຖືກຮັບຮູ້ເຖິງຂອບເຂດທີ່ອາດຈະເປັນໄປໄດ້ວ່າຜົນປະໂຫຍດທີ່ຕ້ອງເສຍອາກອນໃນອານາຄົດຈະສາມາດອານຸຍາດໃຫ້ອາກອນຊັບສິນເລື່ອນຊຳລະນັ້ນຄືນ.





## 2. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.15 ອາກອນກຳໄລ(ຕໍ່)

**ອາກອນລໍຖ້າສະສາງ(ຕໍ່)**

ຊັບສິນ ແລະ ໜີ້ສິນທາງອາກອນລໍຖ້າສະສາງ ແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ພາຍໃນປີ ເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ກະກຽມໃບລາຍງານຖານະການເງິນ.

ອາກອນພາຍໃນປີ ແລະ ອາກອນລໍຖ້າສະສາງແມ່ນຮັບຮູ້ເປັນຜົນປະໂຫຍດດ້ານອາກອນລາຍໄດ້ ຫຼື ລາຍຈ່າຍໃນໃບລາຍງານຜົນການດຳເນີນງານ.

ທະນາຄານໄດ້ຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນລໍຖ້າສະສາງ ຖ້າຫາກມີສິດບັງຄັບໃຊ້ທາງກົດໝາຍ ແລະ ທະນາຄານມີຄວາມຕັ້ງໃຈທີ່ຈະລາຍງານເປັນມູນຄ່າສຸດທິ.

### 2.16 ຜົນປະໂຫຍດພະນັກງານ

**ຜົນປະໂຫຍດຫຼັງອອກການ**

ຜົນປະໂຫຍດຫຼັງອອກການຈະຈ່າຍໃຫ້ແກ່ພະນັກງານອອກບຳນານຂອງທະນາຄານ ໂດຍພະແນກຄັງປະກັນສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ທະນາຄານໄດ້ຖືກກຳນົດໃຫ້ປະກອບສ່ວນໃຫ້ແກ່ຜົນປະໂຫຍດຂອງພະນັກງານຫຼັງອອກການ ໂດຍການຈ່າຍປະກັນໄພໃຫ້ແກ່ປະກັນສັງຄົມໃນອັດຕາ 6.00% ຂອງເພດານເງິນຝາກຄ່ຳປະກັນຄືນ ທະນາຄານບໍ່ມີພັນທະກ່ຽວກັບຜົນປະໂຫຍດຂອງພະນັກງານຫຼັງອອກການນອກເໜືອຈາກນີ້.

**ຜົນປະໂຫຍດພາຍຫຼັງຍົກເລີກສັນຍາຈ້າງງານ**

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ທີ່ອອກໂດຍປະທານປະເທດຂອງ ສປປ ລາວ ໃນວັນທີ 24 ທັນວາ 2013, ທະນາຄານມີພັນທະຈ່າຍເງິນຊົດເຊີຍໃຫ້ພະນັກງານຜູ້ທີ່ຖືກເລີກຈ້າງເນື່ອງຈາກກໍລະນີດັ່ງຕໍ່ໄປນີ້:

- ຜູ້ອອກແຮງງານຂາດທັກສະພິເສດ ຫຼື ບໍ່ມີສຸຂະພາບທີ່ດີ ແລະ ມີໃບຢັ້ງຢືນການແພດ, ແລະ ຫຼັງຈາກປ່ອຍໃຫ້ຜູ້ອອກແຮງງານປະຕິບັດວຽກອື່ນໆ, ວຽກທີ່ເໝາະສົມກວ່າຕາມຄວາມສາມາດ ແລະ ສຸຂະພາບຂອງເຂົາເຈົ້າ, ແຕ່ວ່າຜູ້ທີ່ມີຄຳຖາມຍັງບໍ່ສາມາດເຮັດວຽກໄດ້;
- ນາຍຈ້າງພິຈາລະນາວ່າຈຳເປັນຕ້ອງຫຼຸດຈຳນວນພະນັກງານເພື່ອປັບປຸງວຽກງານພາຍໃນຫົວໜ່ວຍພະນັກງານ ຫຼັງຈາກທີ່ປຶກສາກັບສະຫະພັນການຄ້າ ຫຼື ຜູ້ຕາງໜ້າພະນັກງານ ຫຼື ພະນັກງານສ່ວນໃຫຍ່ ແລະ ໄດ້ລາຍງານຕໍ່ອົງການຄຸ້ມຄອງແຮງງານ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນອຸດໜູນເທື່ອດຽວໃຫ້ພະນັກງານໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນລ່າສຸດຄູນໃຫ້ຈຳນວນເດືອນທີ່ໄດ້ເຮັດວຽກມາ (ມາດຕາ 90). ນະວັນທີ 31 ທັນວາ 2022, ບໍ່ມີພະນັກງານທະນາຄານຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ທະນາຄານບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ຕໍ່)

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

### 3. ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| **ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 3,708 | 6,676 |
| ເງິນກູ້ໃຫ້ແກ່ລູກຄ້າ | 94,798 | 102,478 |
| ການລົງທຶນໃນຫຼັກຊັບ | 6,015 | 369 |
| ລາຍຮັບຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ | 45 | - |
| | **104,566** | **109,523** |
| **ລາຍຈ່າຍດອກເບ້ຍ ແລະ ຄ້າຍຄືດອກເບ້ຍສຳລັບ:** | | |
| ທຸລະກຳລະຫວ່າງທະນາຄານ | (22,334) | (25,740) |
| ເງິນຝາກລູກຄ້າ | (44,305) | (43,689) |
| ອື່ນໆ | (560) | (6,176) |
| | **(67,199)** | **(75,605)** |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ຄ້າຍຄືດອກເບ້ຍ** | **37,367** | **33,918** |

### 4. ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| **ລາຍຮັບຈາກຄ່າທຳນຽມ ແລະ ການບໍລິການຈາກ:** | | |
| ຄ່າທຳນຽມຈາກການໃຫ້ບໍລິການທາງການເງິນ | 7,894 | 7,862 |
| ຄ່າທຳນຽມການໃຫ້ບໍລິການໃນການຊຳລະສະສາງ | 8,466 | 9,365 |
| | **16,360** | **17,227** |
| **ລາຍຈ່າຍຄ່າທຳນຽມ ແລະ ການບໍລິການສຳລັບ:** | | |
| ທຸລະກຳລະຫວ່າງທະນາຄານ | (1,669) | (1,208) |
| ອື່ນໆ | (2) | (7) |
| | **(1,671)** | **(1,215)** |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | **14,689** | **16,012** |

### 5. ກຳໄລສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| ກຳໄລຈາກການຊື້ຂາຍເງິນຕາຕ່າງປະເທດ | 15,019 | 18,063 |
| ຂາດທຶນຈາກການຊື້ຂາຍເງິນຕາຕ່າງປະເທດ | (3,970) | (2,339) |
| | **11,049** | **15,724** |



ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ຕໍ່)

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

### 6. ລາຍຮັບຈາກການດຳເນີນງານອື່ນໆ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| ຄ່າທຳນຽມຈາກການໃຫ້ບໍລິການດ້ານທະນາຄານ | | |
| ລາຍຮັບຈາກການໃຫ້ເຊົ່າ | 1,703 | 1,991 |
| ເກັບຄືນເງິນແຮສຳລັບເງິນກູ້ທີ່ເກີດດອກອອກຜົນ | 1,690 | 1,396 |
| (ບົດອະທິບາຍເລກທີ 13.2) | 408 | 943 |
| ອື່ນໆ | 67 | 138 |
| | **3,868** | **4,468** |

### 7. ເງິນເດືອນ ແລະ ລາຍຈ່າຍອື່ນໆຂອງພະນັກງານ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| ຄ່າແຮງງານ ແລະ ເງິນອຸດໜູນ | 32,018 | 26,477 |
| ຄ່າປະກັນສັງຄົມ | 1,643 | 700 |
| ລາຍຈ່າຍເຝິກອົບຮົມ | 180 | 300 |
| ອື່ນໆ | 112 | 157 |
| | **33,954** | **27,634** |

### 8. ລາຍຈ່າຍໃນການບໍລິຫານອື່ນໆ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| ລາຍຈ່າຍການຕະຫຼາດ ແລະ ການສົ່ງເສີມການຕະຫຼາດ | 4,061 | 3,993 |
| ລາຍຈ່າຍຄ່າເຊົ່າຫ້ອງການ | 806 | 684 |
| ລາຍຈ່າຍສ້ອມແປງ, ບຳລຸງຮັກສາ ແລະ ບູລະນະຄືນໃໝ່ | 1,310 | 1,376 |
| ລາຍຈ່າຍຄ່າໂທລະຄົມມະນາຄົມ | 1,622 | 1,627 |
| ລາຍຈ່າຍຄ່າໄຟຟ້າ ແລະ ຄ່ານ້ຳ | 810 | 823 |
| ລາຍຈ່າຍຄ່າອຸປະກອນ ແລະ ສິ່ງພິມ | 785 | 660 |
| ລາຍຈ່າຍຄ່າເດີນທາງ | 557 | 156 |
| ລາຍຈ່າຍຄ່າທຳນຽມປະກັນໄພ | 220 | 210 |
| ລາຍຈ່າຍໃນການເຝິກອົບຮົມ, ປະຊຸມ ແລະ ສຳມະນາ | 849 | 266 |
| ລາຍຈ່າຍຄ່ານັກກົດໝາຍ ແລະ ຄ່າບໍລິການຈາກນັກວິຊາການ | 224 | 155 |
| ອື່ນໆ | 4,113 | 2,340 |
| | **15,357** | **12,290** |

## 9. ລາຍຈ່າຍການດຳເນີນງານອື່ນໆ

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| ລາຍຈ່າຍເງິນແຮທີ່ກ່ຽວຂ້ອງກັບຄະດີການຮ້ອງຟ້ອງ (ບົດອະທິບາຍເລກທີ 24) | 20,713 | - |
| ລາຍຈ່າຍໃຫ້ແກ່ກອງທຶນປົກປ້ອງຜູ້ຝາກເງິນ | 1,010 | 1,012 |
| | **21,723** | **1,012** |

## 10. ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| **ເງິນສົດໃນຄັງ** | **29,992** | **28,824** |
| ເງິນສົດໃນຄັງສະກຸນເງິນກີບ | 10,177 | 13,347 |
| ເງິນສົດໃນຄັງສະກຸນເງິນຕ່າງປະເທດ | 19,815 | 15,477 |
| **ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ** | **385,914** | **463,510** |
| ເງິນຝາກກະແສລາຍວັນ | 215,090 | 448,567 |
| ເງິນຝາກແຮບັງຄັບ (*) | 10,819 | 14,938 |
| ເງິນຝາກທຶນຈົດທະບຽນ (**) | 160,005 | 5 |
| | 415,906 | 492,334 |

ບັນຊີເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ ລວມມີ ເງິນຝາກກະແສລາຍວັນ, ເງິນຝາກແຮບັງຄັບ ແລະ ເງິນຝາກທຶນຈົດທະບຽນ. ເງິນຝາກທີ່ກ່າວມານັ້ນແມ່ນບໍ່ມີດອກເບ້ຍ.

(*) ພາຍໃຕ້ຂໍ້ກຳນົດຂອງ ທຫລ, ທະນາຄານຕ້ອງໄດ້ຮັກສາຄັງແຮເງິນສົດໄວ້ກັບທະນາຄານແຫ່ງ ສປປ ລາວ ໃນຮູບແບບເງິນຝາກແຮບັງຄັບ ເຊິ່ງຖືກຄິດໄລ່ໃນອັດຕາ 5.00% ສຳລັບເງິນກີບ ແລະ 5.00% ສຳລັບສະກຸນເງິນອື່ນ (2021: 3.00% ແລະ 5.00%), ໃນ 2 ຄັ້ງຕໍ່ເດືອນ ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກວ່າ 12 ເດືອນ. ພາຍໃນປີ, ທະນາຄານໄດ້ຮັກສາເງິນຝາກແຮບັງຄັບ ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ.

(**) ອີງຕາມດຳລັດ ເລກທີ 02/ນຍ ຂອງທະນາຄານແຫ່ງ ສປປ ລາວ, ທະນາຄານໄດ້ຖືກຮຽກຮ້ອງໃຫ້ຮັກສາຍອດເຫຼືອຕ່ຳສຸດຂອງເງິນຝາກຄ້ຳປະກັນທຶນຈົດທະບຽນກັບທະນາຄານແຫ່ງ ສປປ ລາວ ເຊິ່ງເທົ່າກັບ 25% ຂອງທຶນຈົດທະບຽນຖອກແລ້ວເພື່ອຮັກສາຄວາມຕໍ່ເນື່ອງໃນການດຳເນີນງານ. ທະນາຄານໄດ້ຮັບການອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຕາມໜັງສືແຈ້ງການ ລົງວັນທີ 15 ມັງກອນ 2013 ໃນການຖອນເງິນຈາກບັນຊີເງິນຝາກດັ່ງກ່າວ ເພື່ອນຳໃຊ້ເຂົ້າໃນເງິນທຶນໝູນວຽນ. ນະວັນທີ 31 ທັນວາ 2022, ຍອດເຫຼືອເງິນຝາກທຶນຈົດທະບຽນແມ່ນ 160,005 ລ້ານກີບ





## 11. ເງິນຝາກຢູ່ທະນາຄານອື່ນ

### 11.1 ເງິນຝາກກະແສລາຍວັນ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຢູ່ທະນາຄານພາຍໃນປະເທດ** | **17,335** | **25,168** |
| ທະນາຄານ ພັດທະນາລາວ | 400 | 382 |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 1,116 | 14,162 |
| ທະນາຄານ ອຸດສະຫະກຳ ແລະ ການຄ້າຈີນ ສາຂານະຄອນຫຼວງ | 15,819 | 10,624 |
| **ເງິນຝາກກະແສລາຍວັນຢູ່ທະນາຄານຕ່າງປະເທດ** | **380,146** | **541,233** |
| ທະນາຄານ ຫຸ້ນສ່ວນການຄ້າ ໄຊງ່ອນເທືອງຕິ່ນ | 380,142 | 541,231 |
| ທະນາຄານ ຊາຄອມ ກຳປູເຈຍ ຈຳກັດ ມະຫາຊົນ | 2 | 1 |
| ທະນາຄານ ຫຸ້ນສ່ວນການຄ້າທະຫານ ສາຂາ ກຳປູເຈຍ | 2 | 1 |
| | **397,481** | **566,401** |

### 11.2 ເງິນຝາກມີກຳນົດ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| **ເງິນຝາກມີກຳນົດກັບທະນາຄານພາຍໃນປະເທດ** | | |
| ທະນາຄານ ໄຊງ່ອນ-ຮ່າໂນຍ ລາວ ຈຳກັດ | 51,576 | 33,417 |
| ທະນາຄານ ເອຊີລີດາລາວ ຈຳກັດ | - | 10,000 |
| ທະນາຄານ ຮ່ວມພັດທະນາ | 51,576 | 22,278 |
| ທະນາຄານ ລາວຈີນ ຈຳກັດ | 17,192 | - |
| ທະນາຄານ ອິນໂດຈີນ | 49,822 | - |
| ທະນາຄານມາລູຮານ ເຈແປນລາວ | 10,000 | - |
| | **180,166** | **65,695** |

ເງິນຝາກມີກຳນົດໃນສະກຸນເງິນກີບ ທີ່ມີໄລຍະເວລາສາມ (3) ເດືອນ ແລະ ມີອັດຕາດອກເບ້ຍ 3.40% ຕໍ່ປີ.
ເງິນຝາກມີກຳນົດໃນສະກຸນເງິນບາດ ທີ່ມີໄລຍະເວລາສິບສອງ (12) ເດືອນ ແລະ ມີອັດຕາດອກເບ້ຍ 3.50% ຕໍ່ປີ.
ເງິນຝາກມີກຳນົດໃນສະກຸນເງິນໂດລາ ທີ່ມີໄລຍະເວລາຫົກ (6) ຫາສິບສອງ (12) ເດືອນ ແລະ ມີອັດຕາດອກເບ້ຍ 3.50% ຫາ 4.50% ຕໍ່ປີ.

## 12. ການລົງທຶນໃນຫຼັກຊັບ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| **ຫຼັກຊັບທີ່ຖືໄວ້ຈົນຄົບກຳນົດ** | | |
| ພັນທະບັດລັດຖະບານ | 95,121 | 9,161 |
| | **95,121** | **9,161** |

ພັນທະບັດລັດຖະບານ ມີໄລຍະເວລາ 3 ຫາ 10 ປີ ແລະ ມີອັດຕາດອກເບ້ຍ 5.00% ຫາ 6.00%.

### 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບການສູນເສຍສິນເຊື່ອ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| ເງິນກູ້ໃຫ້ລູກຄ້າ (ບົດອະທິບາຍເລກທີ 13.1) | 1,052,384 | 991,424 |
| ຫັກ ເງິນແຮສະເພາະສຳລັບການສູນເສຍສິນເຊື່ອ | (11,386) | (12,121) |
| ໃນນັ້ນ: | | |
| ໜີ້ຄວນເອົາໃຈໃສ່ (ບົດອະທິບາຍເລກທີ 13.2) | (54) | (481) |
| ໜີ້ທີ່ບໍ່ເກີດດອກອອກຜົນ (ບົດອະທິບາຍເລກທີ 13.2) | (11,332) | (11,640) |
| | **1,040,998** | **979,303** |

#### ອັດຕາດອກເບ້ຍເງິນກູ້ໃຫ້ລູກຄ້າພາຍໃນປີ ມີດັ່ງລຸ່ມນີ້:

| | 31/12/2022<br>% ຕໍ່ປີ | 31/12/2021<br>% ຕໍ່ປີ |
|---|---|---|
| ເງິນກູ້ ທີ່ເປັນສະກຸນເງິນ ກີບ | 3.00 - 15.00 | 0.00 - 15.00 |
| ເງິນກູ້ ທີ່ເປັນສະກຸນເງິນ ໂດລາ | 6.30 - 9.05 | 5.00 - 9.00 |
| ເງິນກູ້ ທີ່ເປັນສະກຸນເງິນ ບາດ | 6.00 - 10.00 | 6.00 - 9.00 |

### 13.1 ການວິເຄາະເງິນກູ້ໃຫ້ລູກຄ້າ

#### ການວິເຄາະເງິນກູ້ຕາມສະກຸນເງິນ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນ ກີບ | 895,455 | 854,056 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນ ໂດລາ | 142,023 | 116,965 |
| ເງິນກູ້ ແລະ ເງິນລ່ວງໜ້າທີ່ເປັນເງິນ ບາດ | 14,906 | 20,403 |
| | **1,052,384** | **991,424** |

#### ການວິເຄາະເງິນກູ້ຕາມໄລຍະເວລາເງິນກູ້

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| ເງິນກູ້ໄລຍະສັ້ນ | 277,289 | 245,791 |
| ເງິນກູ້ໄລຍະກາງ | 312,439 | 263,135 |
| ເງິນກູ້ໄລຍະຍາວ | 462,656 | 482,498 |
| | **1,052,384** | **991,424** |





### 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບການສູນເສຍສິນເຊື່ອ(ຕໍ່)

### 13.1 ການວິເຄາະເງິນກູ້ໃຫ້ລູກຄ້າ(ຕໍ່)

#### ການວິເຄາະເງິນກູ້ຕາມປະເພດຂອງອຸດສາຫະກຳ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| ຂະແໜງການຄ້າ | 217,607 | 169,420 |
| ຂະແໜງການກໍ່ສ້າງ | 37,876 | 47,661 |
| ຂະແໜງການອຸດສາຫະກຳ | 46,629 | 33,900 |
| ຂະແໜງການບໍລິການ | 57,515 | 49,518 |
| ຂະແໜງກະສິກຳ ແລະ ປ່າໄມ້ | 123,704 | 79,057 |
| ບໍລິສັດຂົນສົ່ງ | 360 | 360 |
| ຂະແໜງການຫັດຖະກຳ | 4,383 | 5,720 |
| ຂະແໜງອື່ນໆ | 564,310 | 605,788 |
| | **1,052,384** | **991,424** |

### 13.2 ເງິນແຮສຳລັບການສູນເສຍສິນເຊື່ອ

#### ການເຄື່ອນໄຫວຂອງເງິນແຮສຳລັບການສູນເສຍສິນເຊື່ອຂອງທະນາຄານ ພາຍໃນປີ 2022 ມີດັ່ງນີ້:

| | ເງິນແຮສະເພາະ | | ເງິນແຮທົ່ວໄປສຳລັບ | |
|---|---|---|---|---|
| | ໜີ້ທີ່ບໍ່ເກີດດອກອອກຜົນ | ໜີ້ຄວນເອົາໃຈໃສ່ | ເງິນກູ້ປົກກະຕິ | ລວມ |
| | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ |
| **ຍອດເຫຼືອນະວັນທີ 1 ມັງກອນ 2022** | **11,640** | **481** | **4,695** | **16,816** |
| (ເກັບຄືນ)/ລາຍຈ່າຍເງິນແຮສຸດທິພາຍໃນປີ | (308) | (428) | 20 | (716) |
| ສ່ວນຕ່າງຈາກອັດຕາແລກປ່ຽນ | - | 1 | 323 | 324 |
| **ຍອດເຫຼືອນະວັນທີ 31 ທັນວາ 2022** | **11,332** | **54** | **5,038** | **16,424** |

#### ການເຄື່ອນໄຫວຂອງເງິນແຮສຳລັບການສູນເສຍສິນເຊື່ອຂອງທະນາຄານ ພາຍໃນປີ 2021 ມີດັ່ງນີ້:

| | ເງິນແຮສະເພາະ | | ເງິນແຮທົ່ວໄປສຳລັບ | |
|---|---|---|---|---|
| | ໜີ້ທີ່ບໍ່ເກີດດອກອອກຜົນ | ໜີ້ຄວນເອົາໃຈໃສ່ | ເງິນກູ້ປົກກະຕິ | ລວມ |
| | ລ້ານກີບ | ລ້ານກີບ | ລ້ານກີບ | ລ້ານກີບ |
| **ຍອດເຫຼືອນະວັນທີ 1 ມັງກອນ 2021** | **2,460** | **1,175** | **4,862** | **8,497** |
| (ເກັບຄືນ)/ລາຍຈ່າຍ ເງິນແຮສຸດທິ | 9,180 | (696) | (247) | 8,237 |
| ສ່ວນຕ່າງຈາກອັດຕາແລກປ່ຽນ | - | 2 | 80 | 82 |
| **ຍອດເຫຼືອນະວັນທີ 31 ທັນວາ 2021** | **11,640** | **481** | **4,695** | **16,816** |

## 13. ເງິນກູ້ໃຫ້ລູກຄ້າ, ຫຼັງຫັກເງິນແຮສະເພາະສຳລັບການສູນເສຍສິນເຊື່ອ(ຕໍ່)

### 13.2 ການວິເຄາະເງິນກູ້ໃຫ້ລູກຄ້າ(ຕໍ່)

**ລາຍລະອຽດຂອງການຈັດຊັ້ນໜີ້ ແລະ ເງິນແຮຕາມລະບຽບການຂອງ ທຫລ ນະປີທີ່ສິ້ນສຸດ 31 ທັນວາ 2022 ມີດັ່ງລຸ່ມນີ້:**

| | ຍອດເຫຼືອເງິນກູ້<br>ລ້ານກີບ | ເງິນແຮສຳລັບ<br>ການສູນເສຍສິນເຊື່ອ<br>ລ້ານກີບ |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ: | | |
| - ໜີ້ປົກກະຕິ | 1,007,631 | 5,038 |
| - ໜີ້ຄວນເອົາໃຈໃສ່ | 1,814 | 54 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ: | | |
| - ໜີ້ຕໍ່າກວ່າມາດຕະຖານ | 1,918 | 384 |
| - ໜີ້ສົງໄສ | 6,518 | 2,014 |
| - ໜີ້ສູນ | 34,503 | 8,934 |
| | **1,052,384** | **16,424** |

**ຜົນຂອງການຈັດຊັ້ນໜີ້ ແລະ ການຫັກເງິນແຮ ຕາມຂໍ້ກຳນົດຂອງ ທຫລ ນະປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:**

| | ຍອດເຫຼືອເງິນກູ້<br>ລ້ານກີບ | ເງິນແຮສຳລັບ<br>ການສູນເສຍສິນເຊື່ອ<br>ລ້ານກີບ |
|---|---|---|
| ເງິນກູ້ທີ່ເກີດດອກອອກຜົນ: | | |
| - ໜີ້ປົກກະຕິ | 938,987 | 4,695 |
| ເງິນກູ້ທີ່ບໍ່ເກີດດອກອອກຜົນ: | 16,049 | 481 |
| - ໜີ້ຄວນເອົາໃຈໃສ່ | | |
| - ໜີ້ຕໍ່າກວ່າມາດຕະຖານ | 3,253 | 651 |
| - ໜີ້ຕ້ອງສົງໄສ | 6,104 | 3,052 |
| - ໜີ້ສູນ | 27,031 | 7,937 |
| | **991,424** | **16,816** |

## 14. ຊັບສິນບັດຄົງທີ່

### 14.1 ຊັບສິນພວມຊື້ພວມກໍ່ສ້າງ

| | ລວມ<br>ລ້ານກີບ |
|---|---|
| **ຕົ້ນທຶນ** | |
| **ນະວັນທີ 1 ມັງກອນ 2022** | **57** |
| ຮັບຮູ້ເຂົ້າໃໝ່ | 296 |
| **ນະວັນທີ 31 ທັນວາ 2022** | **353** |



ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ຕໍ່)

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

## 14. ຊັບສິນບັດຄົງທີ່(ຕໍ່)

### 14.2 ຊັບສິນບັດຄົງທີ່ບໍ່ມີຕົວຕົນ

**ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້:**

| | ສິດນຳໃຊ້ທີ່ດິນ<br>ລ້ານກີບ | ຊອບແວ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2022 | 15,855 | 5,897 | 21,752 |
| ຮັບຮູ້ເຂົ້າໃໝ່ | - | 554 | 554 |
| ນະວັນທີ 31 ທັນວາ 2022 | 15,855 | 6,451 | 22,306 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ມັງກອນ 2022 | - | 5,897 | 5,897 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | - | 19 | 19 |
| ນະວັນທີ 31 ທັນວາ 2022 | - | 5,916 | 5,916 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | |
| ນະວັນທີ 1 ມັງກອນ 2022 | 15,855 | - | 15,855 |
| ນະວັນທີ 31 ທັນວາ 2022 | 15,855 | 535 | 16,390 |

**ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ບໍ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ນະວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:**

| | ສິດນຳໃຊ້ທີ່ດິນ<br>ລ້ານກີບ | ຊອບແວ<br>ລ້ານກີບ | ລວມ<br>ລ້ານກີບ |
|---|---|---|---|
| **ຕົ້ນທຶນ:** | | | |
| ນະວັນທີ 1 ມັງກອນ 2021 | 15,855 | 5,897 | 21,752 |
| ຮັບຮູ້ເຂົ້າໃໝ່ | - | - | - |
| ນະວັນທີ 31 ທັນວາ 2021 | 15,855 | 5,897 | 21,752 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | |
| ນະວັນທີ 1 ມັງກອນ 2021 | - | 5,897 | 5,897 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | - | - | - |
| ນະວັນທີ 31 ທັນວາ 2021 | - | 5,897 | 5,897 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | |
| ນະວັນທີ 1 ມັງກອນ 2021 | 15,855 | - | 15,855 |
| ນະວັນທີ 31 ທັນວາ 2021 | 15,855 | - | 15,855 |

## 14. ຊັບສິນບັດຄົງທີ່(ຕໍ່)

### 14.3 ຊັບສິນບັດຄົງທີ່ມີຕົວຕົນ

**ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້:**

| | ອາຄານ ແລະ ສິ່ງປຸກສ້າງ ລ້ານກີບ | ອຸປະກອນສຳນັກງານ ລ້ານກີບ | ພາຫະນະ ລ້ານກີບ | ຊັບສິນບັດຄົງທີ່ ມີຕົວຕົນອື່ນໆ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2022 | 116,972 | 23,165 | 3,219 | 1,580 | 144,936 |
| ຮັບຮູ້ເຂົ້າໃໝ່ | - | 15,727 | - | - | 15,727 |
| ນະວັນທີ 31 ທັນວາ 2022 | 116,972 | 38,892 | 3,219 | 1,580 | 160,663 |
| | | | | | |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2022 | 57,707 | 17,582 | 3,043 | 1,306 | 79,638 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | 5,930 | 2,822 | 108 | 159 | 9,019 |
| ນະວັນທີ 31 ທັນວາ 2022 | 63,637 | 20,404 | 3,151 | 1,465 | 88,657 |
| | | | | | |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2022 | 59,265 | 5,583 | 176 | 274 | 65,298 |
| ນະວັນທີ 31 ທັນວາ 2022 | 53,335 | 18,488 | 68 | 115 | 72,006 |

## 14. ຊັບສິນບັດຄົງທີ່(ຕໍ່)

### 14.3 ຊັບສິນບັດຄົງທີ່ມີຕົວຕົນ(ຕໍ່)

**ການເຄື່ອນໄຫວຂອງຍອດເຫຼືອຂອງຊັບສິນບັດຄົງທີ່ມີຕົວຕົນ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:**

| | ອາຄານ ແລະ ສິ່ງປຸກສ້າງ ລ້ານກີບ | ອຸປະກອນສໍານັກງານ ລ້ານກີບ | ພາຫະນະ ລ້ານກີບ | ຊັບສິນບັດຄົງທີ່ມີຕົວຕົນອື່ນໆ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|
| **ຕົ້ນທຶນ:** | | | | | |
| ນະວັນທີ 1 ມັງກອນ 2021 | 116,972 | 22,783 | 3,600 | 1,566 | 144,921 |
| ຮັບຮູ້ເຂົ້າໃໝ່ | - | 382 | - | 14 | 396 |
| ສະສາງ | - | - | (381) | - | (381) |
| ນະວັນທີ 31 ທັນວາ 2021 | 116,972 | 23,165 | 3,219 | 1,580 | 144,936 |
| | | | | | |
| **ຄ່າຫຼຸ້ຍຫ້ຽນສະສົມ:** | | | | | |
| ນະວັນທີ 1 ມັງກອນ 2021 | 49,941 | 16,159 | 3,213 | 1,102 | 70,415 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | 7,766 | 1,423 | 210 | 204 | 9,603 |
| ສະສາງ | - | - | (381) | - | (381) |
| ນະວັນທີ 31 ທັນວາ 2021 | 57,707 | 17,582 | 3,043 | 1,306 | 79,638 |
| | | | | | |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | | | | | |
| ນະວັນທີ 1 ມັງກອນ 2021 | 67,031 | 6,624 | 387 | 464 | 74,506 |
| ນະວັນທີ 31 ທັນວາ 2021 | 59,265 | 5,583 | 176 | 274 | 65,298 |

## 14. ຊັບສິນບັດຄົງທີ່ (ຕໍ່)

### 14.4 ສິດນຳໃຊ້ຊັບສິນ

**ການເຄື່ອນໄຫວຂອງຍອດເຫຼືອຂອງສິດນຳໃຊ້ຊັບສິນ ພາຍໃນປີທີ່ສິ້ນສຸດ ວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້:**

| | ຊັບສິນບັດຄົງທີ່ມີຕົວຕົນອື່ນໆ<br>ລ້ານກີບ |
|---|---|
| **ຕົ້ນທຶນ:** | |
| ນະວັນທີ 31 ທັນວາ 2021 | 7,711 |
| ຮັບຮູ້ເຂົ້າໃໝ່ | - |
| ນະວັນທີ 31 ທັນວາ 2022 | 7,711 |
| **ຄ່າຫຼຸ້ຍຫ້ຽນສະສົມ:** | |
| ນະວັນທີ 31 ທັນວາ 2021 | 1,060 |
| ຫັກຄ່າຫຼຸ້ຍຫ້ຽນພາຍໃນປີ | 1,052 |
| ນະວັນທີ 31 ທັນວາ 2022 | 2,112 |
| **ມູນຄ່າທີ່ຍັງເຫຼືອສຸດທິ:** | |
| ນະວັນທີ 31 ທັນວາ 2021 | 6,651 |
| ນະວັນທີ 31 ທັນວາ 2022 | 5,599 |

**ການກຳນົດໄວ້ຂ້າງລຸ່ມນີ້ແມ່ນຈຳນວນຍອດຍົກມາຂອງໜີ້ສິນຕາມສັນຍາເຊົ່າ ແລະ ການເຄື່ອນໄຫວພາຍໃນປີ:**

| | 2022<br>ລ້ານກີບ |
|---|---|
| **ນະວັນທີ 1 ມັງກອນ 2022** | **7,297** |
| ດອກເບ້ຍຄ້າງຈ່າຍ | 441 |
| ການຊຳລະ | (3,230) |
| ສ່ວນຜິດດ່ຽງຈາກອັດຕາແລກປ່ຽນ | 3,329 |
| **ນະວັນທີ 31 ທັນວາ 2022** | 7,837 |

## 15. ໜີ້ຕ້ອງຮັບດອກເບ້ຍຄ້າງຮັບ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| ໜີ້ຕ້ອງຮັບດອກເບ້ຍເບ້ຍຄ້າງຮັບຈາກ: | | |
| ເງິນຝາກຢູ່ທະນາຄານ | 1,212 | 1,372 |
| ການລົງທຶນໃນຫຼັກຊັບ | 1,273 | 369 |
| ເງິນກູ້ແກ່ລູກຄ້າ | 7,557 | 12,737 |
| | **10,042** | **14,478** |



## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ຕໍ່)

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

## 16. ຊັບສິນອື່ນໆ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| ດອກເບ້ຍຈ່າຍລ່ວງໜ້າໃຫ້ລູກຄ້າເງິນຝາກ | 3,271 | 4,415 |
| ລາຍຈ່າຍຈ່າຍລ່ວງໜ້າ | 4,076 | 3,619 |
| ລາຍຈ່າຍລ່ວງໜ້າໃຫ້ຜູ້ສະໜອງ | 11,438 | 3,103 |
| ໜີ້ຄ້າງຮັບຈາກ ຄ່າໃຊ້ຈ່າຍຂອງທະນາຄານຊາຄອມແບັງ | 454 | 343 |
| ອື່ນໆ | 1,763 | 676 |
| | **21,002** | **12,156** |

## 17. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ** | **2,175** | **6,999** |
| ກອງທຶນປະກັນສັງຄົມແຫ່ງຊາດ | 972 | 4,331 |
| ກອງທຶນປົກປ້ອງຜູ້ຝາກເງິນ | - | 75 |
| ສະຫະພັນການຄ້າລາວ, ສະຫວັນນະເຂດ | 374 | 1,837 |
| ອື່ນໆ | 829 | 756 |
| **ເງິນຝາກກະແສລາຍວັນຈາກທະນາຄານຕ່າງປະເທດ** | **178,667** | **224,120** |
| ທະນາຄານ ການຄ້າ ໄຊງ່ອນ ເທື່ອງຕິນ | 178,667 | 224,120 |
| **ເງິນຝາກມີກຳນົດຈາກທະນາຄານ ແລະ ສະຖາບັນການເງິນພາຍໃນປະເທດ** | **565,820** | **530,724** |
| ກອງທຶນປະກັນສັງຄົມແຫ່ງຊາດ | 258,000 | 277,000 |
| ກອງທຶນປົກປ້ອງຜູ້ຝາກເງິນ | - | 25,000 |
| ທະນາຄານໂລກ-ພະແນກ ສົ່ງເສີມທຸລະກິດຂະໜາດກາງ ແລະ ຂະໜາດນ້ອຍ | 141,586 | 115,030 |
| ທະນາຄານ ແຫ່ງ ສປປ ລາວ (ກົມບໍລິການທະນາຄານ) | 18,350 | 18,350 |
| ທະນາຄານ ແຫ່ງ ສປປ ລາວ (ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ) | 15,000 | 15,000 |
| ບໍລິສັດ ຫຼັກຊັບລ້ານຊ້າງ ມະຫາຊົນ | 3,000 | 7,000 |
| ບໍລິສັດ ອາລີແອັນສ ປະກັນໄພ ລາວ | - | 13,673 |
| ທະນາຄານ ລາວຈີນ ຈຳກັດ | 20,000 | - |
| ທະນາຄານ ມາລູຮານ ເຈແປນລາວ | 17,192 | - |
| ສະຫະພັນການຄ້າລາວ, ສະຫວັນນະເຂດ | 12,500 | 8,000 |
| ທະນາຄານການຄ້າຕ່າງປະເທດຫວຽດນາມ ປະຈຳລາວຈຳກັດ | - | 20,000 |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 30,000 | 30,000 |
| ບໍລິສັດ ປະກັນໄພ ບີເອັສເອສ ລາວ ຈຳກັດ | - | 557 |
| ທະນາຄານ ພັດທະນາ ລາວ | 8,000 | - |
| ທະນາຄານ ອາເອັສບີ ລາວ | 42,192 | - |
| ສະຖາບັນ ປັດສະເຕີ ລາວ | - | 1,114 |
| | **746,662** | **761,843** |

## 17. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

ເງິນຝາກມີກຳນົດໃນສະກຸນເງິນກີບ ທີ່ມີໄລຍະຫົກ (6) ຫາ ຫົກສິບ (60) ເດືອນ ແລະ ມີອັດຕາດອກເບ້ຍ 4.00% ຫາ 6.72%.

ເງິນຝາກມີກຳນົດໃນສະກຸນເງິນໂດລາ ທີ່ມີໄລຍະສາມ (3) ຫາ ຊາວສີ່ (24) ເດືອນ ແລະ ມີອັດຕາດອກເບ້ຍ 2.60% ຫາ 5.80%.

## 18. ໜີ້ຕ້ອງສົ່ງໃຫ້ລູກຄ້າ

**ເງິນຝາກ ແລະ ໜີ້ຕ້ອງຈ່າຍອື່ນໆໃຫ້ແກ່ລູກຄ້າ ນະວັນທີ 31 ທັນວາ 2022 ມີດັ່ງນີ້:**

| | 31/12/2022<br>ລ້ານກີບ | 31/12/2021<br>ລ້ານກີບ |
|---|---|---|
| **ເງິນຝາກກະແສລາຍວັນ** | **91,738** | **96,632** |
| - ເງິນກີບ | 18,218 | 27,564 |
| - ເງິນຕາຕ່າງປະເທດ | 73,520 | 69,068 |
| **ເງິນຝາກປະຢັດ** | **83,103** | **61,428** |
| - ເງິນກີບ | 36,012 | 28,239 |
| - ເງິນຕາຕ່າງປະເທດ | 47,091 | 33,189 |
| **ເງິນຝາກມີກຳນົດ** | **755,384** | **904,986** |
| - ເງິນກີບ | 147,104 | 275,058 |
| - ເງິນຕາຕ່າງປະເທດ | 608,280 | 629,928 |
| **ເງິນຝາກຄ້ຳປະກັນ** | **3,519** | **433** |
| - ເງິນກີບ | - | - |
| - ເງິນຕາຕ່າງປະເທດ | 3,519 | 433 |
| **ໜີ້ຕ້ອງສົ່ງໃຫ້ລູກຄ້າອື່ນໆ** | **2,421** | **2,875** |
| - ເງິນກີບ | 1,517 | 2,208 |
| - ເງິນຕາຕ່າງປະເທດ | 904 | 667 |
| | **936,165** | **1,066,354** |

**ອັດຕາດອກເບ້ຍຕ້ອງຈ່າຍໃຫ້ລູກຄ້າໃນທ້າຍປີມີດັ່ງນີ້:**

| | 31/12/2022<br>ອັດຕາດອກເບ້ຍ<br>% ຕໍ່ປີ | 31/12/2021<br>ອັດຕາດອກເບ້ຍ<br>% ຕໍ່ປີ |
|---|---|---|
| ເງິນຝາກກະແສລາຍວັນ ສະກຸນເງິນກີບ | 1.00 - 1.89 | 1.00 - 1.30 |
| ເງິນຝາກກະແສລາຍວັນ ສະກຸນເງິນໂດລາ | 0.10 - 0.25 | 0.00 - 0.50 |
| ເງິນຝາກກະແສລາຍວັນ ສະກຸນເງິນບາດ | 0.10 - 0.15 | 0.00 - 0.30 |
| ເງິນຝາກປະຢັດ ສະກຸນເງິນກີບ | 0.00 - 1.89 | 0.00 - 1.89 |
| ເງິນຝາກປະຢັດ ສະກຸນເງິນໂດລາ | 0.25 - 1.00 | 0.50 - 1.00 |
| ເງິນຝາກປະຢັດ ສະກຸນເງິນບາດ | 0.15 - 1.00 | 0.30 - 1.00 |
| ເງິນຝາກປະຈຳ ສະກຸນເງິນກີບ | 2.50 - 7.77 | 1.89 – 6.90 |
| ເງິນຝາກປະຈຳ ສະກຸນເງິນໂດລາ | 0.75 - 6.99 | 1.30 - 6.35 |
| ເງິນຝາກປະຈຳ ສະກຸນເງິນບາດ | 0.75 - 6.95 | 1.00 - 6.05 |





## 19. ດອກເບ້ຍຄ້າງຈ່າຍ

| | 31 ທັນວາ 2022<br>ລ້ານກີບ | 31 ທັນວາ 2021<br>ລ້ານກີບ |
|---|---|---|
| **ດອກເບ້ຍຄ້າງຈ່າຍ ສຳລັບ:** | | |
| ທະນາຄານ ແລະ ສະຖາບັນການເງິນອື່ນ | 9,915 | 12,990 |
| ເງິນຝາກຂອງລູກຄ້າ | 23,372 | 20,514 |
| | **33,287** | **33,504** |

## 20. ອາກອນ

### 20.1 ອາກອນ(ມອບລ່ວງໜ້າ)/ຄ້າງມອບ

| | 31 ທັນວາ 2022<br>ລ້ານກີບ | 31 ທັນວາ 2021<br>ລ້ານກີບ |
|---|---|---|
| ອາກອນກຳໄລ(ມອບລ່ວງໜ້າ)/ຄ້າງມອບ | (978) | (771) |
| ອາກອນເງິນເດືອນຄ້າງມອບ | 423 | 399 |
| ອາກອນອື່ນໆ | - | 242 |
| | **(555)** | **(130)** |

### 20.2 ອາກອນກຳໄລ

ທະນາຄານມີພັນທະຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລທັງໝົດກ່ອນຫັກອາກອນພາຍໃນປີ ໂດຍອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019, ເຊິ່ງມີຜົນບັງຄັບໃຊ້ແຕ່ວັນທີ ຫຼື ຫຼັງຈາກວັນທີ 1 ມັງກອນ 2020. ອາກອນກຳໄລປີ 2022 ແມ່ນຖືກຄິດໄລ່ ດັ່ງລຸ່ມນີ້:

| | 2022<br>ລ້ານກີບ | 2021<br>ລ້ານກີບ |
|---|---|---|
| **(ຂາດທຶນ)/ກຳໄລກ່ອນອາກອນ** | **(13,843)** | **9,343** |
| ລົບ: | | |
| ລາຍການທີ່ບໍ່ຖືເປັນລາຍຮັບ | - | - |
| ບວກ: | | |
| ລາຍການທີ່ບໍ່ຖືເປັນລາຍຈ່າຍ | 90 | 137 |
| **(ຂາດທຶນ)/ກຳໄລທາງອາກອນ** | **(13,753)** | **9,480** |
| ລາຍຈ່າຍອາກອນກຳໄລໃນປີ, ໃນອັດຕາຕາມກົດໝາຍ 20% (2021: 20%) | - | 1,989 |
| ດັດແກ້ລາຍຈ່າຍອາກອນສຳລັບປີທີ່ຜ່ານມາ | - | 194 |
| **ລາຍຈ່າຍອາກອນກຳໄລໃນປີ** | **-** | **2,183** |
| ໜີ້ຕ້ອງສົ່ງອາກອນກຳໄລຕົ້ນປີ | (771) | 240 |
| ອາກອນກຳໄລທີ່ໄດ້ຈ່າຍພາຍໃນປີ | (206) | (3,194) |
| **(ມອບລ່ວງໜ້າ)/ໜີ້ຕ້ອງສົ່ງອາກອນກຳໄລທ້າຍປີ** | **(978)** | **(771)** |

ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ຍ້ອນວ່າການນຳໃຊ້ກົດໝາຍສ່ວຍສາອາກອນ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

## 20. ອາກອນ (ຕໍ່)

### 20.2 ອາກອນກຳໄລ (ຕໍ່)

**ການຍົກຍອດຂາດທຶນທາງອາກອນ**

ການຂາດທຶນຈາກອາກອນຂອງທະນາຄານທີ່ເກີດຂຶ້ນໃນປີ 2022, ພາຍໃຕ້ກົດໝາຍສ່ວຍສາອາກອນສະບັບປະຈຸບັນ, ທະນາຄານມີສິດທີ່ຈະຍົກຍອດຂາດທຶນທາງອາກອນເພື່ອຫັກລົບກັບອາກອນກຳໄລຕ້ອງຈ່າຍທີ່ເກີດຂຶ້ນພາຍໃນ 5 ປີຫຼັງຈາກປີທີ່ເກີດການຂາດທຶນ, ອີງຕາມກົດໝາຍອາກອນຜ່ານມາ. ຫຼັງຈາກ ສິ້ນສຸດໄລຍະນີ້ແລ້ວ, ຈະບໍ່ສາມາດຍົກຍອດຂາດທຶນທີ່ເຫຼືອຢູ່ໄປຫັກລົບກັບອາກອນກຳໄລໄດ້ ລາຍລະອຽດຂອງການຍົກຍອດຂາດທຶນທາງອາກອນທີ່ປະຕິບັດນະວັນທີ 31 ທັນວາ 2022 ມີດັ່ງນີ້:

| ປີ | ສາມາດ ນຳໃຊ້ເຖິງ | ຂາດທຶນ ເພີ່ມເຕີມໃນປີ ລ້ານກີບ | ສາມາດນຳໃຊ້ ໄດ້ຮອດທ້າຍປີ ລ້ານກີບ | ມູນຄ່າທີ່ບໍ່ໄດ້ນຳໃຊ້ແຕ່ ສາມາດນຳໃຊ້ໄດ້ໃນປີໜ້າ ລ້ານກີບ | ຂາດທຶນທາງອາກອນ ທີ່ບໍ່ໄດ້ນຳໃຊ້ໃນທ້າຍປີ ລ້ານກີບ |
|---|---|---|---|---|---|
| 2022 (*) | 2027 | (13,753) | - | - | (13,753) |

(*) ນະວັນທີ່ປິດລາຍງານທາງການເງິນເຫຼົ່ານີ້, ການປະເມີນອາກອນສຳລັບປີທີ່ສິ້ນສຸດລົງ 31 ທັນວາ 2022 ຍັງບໍ່ໄດ້ສະຫຼຸບລວມໂດຍໜ່ວຍງານຂອງອາກອນ.

### 20.3 ອາກອນລໍຖ້າສະສາງ

| | ໃບລາຍງານຖານະທາງການເງິນ | | ໃບລາຍງານຜົນການດຳເນີນງານ | |
|---|---|---|---|---|
| | 31/12/2022 ລ້ານກີບ | 31/12/2021 ລ້ານກີບ | 2022 ລ້ານກີບ | 2022 ລ້ານກີບ |
| ຊັບສິນທາງອາກອນລໍຖ້າສະສາງ | 2,751 | - | 2,751 | - |
| ອາກອນລໍຖ້າສະສາງສຸດທິທີ່ຕ້ອງບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ | | | **2,751** | - |

**ລາຍລະອຽດຂອງ ຊັບສິນທາງອາກອນລໍຖ້າສະສາງ ແລະ ໜີ້ສິນທາງອາກອນລໍຖ້າສະສາງ ມີດັ່ງນີ້:**

| | 31/12/2022 ລ້ານກີບ | 31/12/2021 ລ້ານກີບ |
|---|---|---|
| ສ່ວນຕ່າງຊົ່ວຄາວທີ່ສາມາດຫັກໄດ້ | 13,753 | - |
| ລວມມີ | | |
| ການຍົກຍອດຂາດທຶນທາງອາກອນ | 13,753 | - |
| ຊັບສິນທາງອາກອນລໍຖ້າສະສາງ 20% | **2,751** | - |

## 21. ໜີ້ສິນອື່ນໆ

| | 31/12/2022 ລ້ານກີບ | 31/12/2021 ລ້ານກີບ |
|---|---|---|
| ໜີ້ຕ້ອງສົ່ງໃຫ້ຜູ້ສະໜອງ | 10,269 | 5,136 |
| ລາຍຮັບຄ່າເຊົ່າລໍຖ້າສະສາງ | 911 | 110 |
| ໜີ້ຕ້ອງສົ່ງສຳລັບຄະດີຮ້ອງຟ້ອງ (ບົດອະທິບາຍເລກທີ 24) | 20,713 | - |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 1 | 1 |
| | **31,894** | **5,247** |



ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ(ຕໍ່)

ນະວັນທີ ແລະ ສຳລັບປີທີ່ສິ້ນສຸດ ວັນທີ 31 ທັນວາ 2022

## 22. ເງິນສົດ ແລະ ທຽບເທົ່າເງິນສົດ

| | 31/12/2022 ລ້ານກີບ | 31/12/2021 ລ້ານກີບ |
|---|---|---|
| ເງິນສົດໃນຄັງ | 29,992 | 28,824 |
| ເງິນຝາກຢູ່ ທຫລ | 225,909 | 463,505 |
| ເງິນຝາກກະແສລາຍວັນກັບສະຖາບັນການເງິນ | 397,481 | 566,401 |
| | **653,382** | **1,058,730** |

## 23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງປະກອບດ້ວຍລາຍການທຸລະກຳທັງໝົດທີ່ດຳເນີນການໂດຍພາກສ່ວນອື່ນໆທີ່ກ່ຽວຂ້ອງກັບທະນາຄານ, ພາກສ່ວນຈະກ່ຽວຂ້ອງກັບທະນາຄານຖ້າວ່າ:

(ກ) ພາກສ່ວນທີ່ທຳໜ້າທີ່ທາງກົງ ຫຼື ທາງອ້ອມໂດຍຜ່ານຄົນກາງຄົນໜຶ່ງ ຫຼື ຫຼາຍຄົນ ດັ່ງລຸ່ມນີ້:

- ຄວບຄຸມ, ຖືກຄວບຄຸມ ຫຼື ຢູ່ໃຕ້ການຄວບຄຸມລວມກັບທະນາຄານ (ໃນນີ້ລວມມີ ທະນາຄານສຳນັກງານໃຫຍ່, ສາຂາ ແລະ ຄູ່ສາຂາ);
- ມີຜົນປະໂຫຍດໃນທະນາຄານ ທີ່ມີອິດທິພົນທີ່ສຳຄັນຕໍ່ທະນາຄານ; ຫຼື
- ມີສ່ວນຮ່ວມໃນການຄວບຄຸມທະນາຄານ.

(ຂ) ພາກສ່ວນທີ່ຮ່ວມລົງທຶນກັບທະນາຄານ;

(ຄ) ພາກສ່ວນທີ່ເປັນສະມາຊິກຄົນສຳຄັນໃນຄະນະບໍລິຫານຂອງທະນາຄານ ຫຼື ຂອງທະນາຄານສຳນັກງານໃຫຍ່,

(ງ) ພາກສ່ວນທີ່ເປັນສະມາຊິກຢ່າງໃກ້ຊິດຂອງຄອບຄົວຂອງບຸກຄົນທີ່ໄດ້ອ້າງອີງໃນຂໍ້ (ກ) ຫຼື (ຄ);

(ຈ) ພາກສ່ວນທີ່ເປັນທະນາຄານທີ່ຖືກຄວບຄຸມ, ຄວບຄຸມຮ່ວມ ຫຼື ມີອິດທິພົນສຳຄັນ ຫຼື ຜູ້ທີ່ມີສິດໃນການລົງຄະແນນສຽງທີ່ສຳຄັນເຊັ່ນ: ທະນາຄານແຕ່ງຕັ້ງໂດຍກົງ ຫຼື ທາງອ້ອມ, ກັບບຸກຄົນທີ່ລະບຸໃນຂໍ້ (ຄ) ຫຼື (ງ); ຫຼື

(ສ) ພາກສ່ວນທີ່ເປັນຜົນປະໂຫຍດຂອງພະນັກງານໃນທະນາຄານ, ຫຼື ທະນາຄານອື່ນໆທີ່ກ່ຽວຂ້ອງກັບພາກສ່ວນຂອງທະນາຄານ.

## 24 ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

**ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງນະວັນທີ 31 ທັນວາ 2022 ມີດັ່ງນີ້:**

| ພາກສ່ວນກ່ຽວຂ້ອງ | ສາຍພົວພັນ | ລາຍການ ເຄື່ອນໄຫວ | ໜີ້ຕ້ອງຮັບ ລ້ານກີບ | ໜີ້ຕ້ອງສົ່ງ ລ້ານກີບ |
|---|---|---|---|---|
| ທະນາຄານ ຮຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ | ສຳນັກງານໃຫຍ່ | ເງິນຝາກກະແສລາຍວັນ | 380,142 | - |
| | | ໜີ້ຕ້ອງສົ່ງ | - | 178,667 |
| ທະນາຄານ ຊາຄອມແບັງ ສາຂາກຳປູເຈຍ | ບໍລິສັດໃນເຄືອ | ເງິນຝາກ | 2 | - |
| ທະນາຄານ ຊາຄອມແບັງ ຣິມີແທນສ ເອັກສເພຣສ | ບໍລິສັດໃນເຄືອ | ໜີ້ຕ້ອງຮັບ | 381 | - |

**ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງພາຍໃນປີມີດັ່ງນີ້:**

| ພາກສ່ວນກ່ຽວຂ້ອງ | ສາຍພົວພັນ | ລາຍການ ເຄື່ອນໄຫວ | ປີປັດຈຸບັນ ລ້ານກີບ | ປີຜ່ານມາ ລ້ານກີບ |
|---|---|---|---|---|
| ທະນາຄານຫຸ້ນສ່ວນການຄ້າ ໄຊ່ງ່ອນເທືອງຕິ່ນ | ສຳນັກງານໃຫຍ່ | ລາຍຮັບດອກເບ້ຍ | 943 | 421 |
| ຄ່າຕອບແທນ | ສະພາອຳນວຍການ | ເງິນເດືອນ | | |
| | ແລະ ຄະນະບໍລິຫານ | ແລະ ໂບນັດ | 2,947 | 3,175 |

### 25. ການດຳເນີນຄະດີ

**ຄະດີພວມດຳເນີນ**

ໃນປີ 2021, ທະນາຄານມີສອງຄະດີທີ່ຕິດພັນກັບຄະດີແພ່ງ ແລະ ຄະດີອາຍາທີ່ກ່ຽວຂ້ອງກັບທຸລະກຳການຢືມເງິນ ຂອງລູກຄ້າ.

ນະວັນທີ 4 ສິງຫາ 2022, ສານໄດ້ມີການຕັດສິນຄະດີການຄ້າ, ໂດຍຕັດສິນໃຫ້ທະນາຄານແພ້ຄະດີ ແລະ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທັງໝົດໃນການດຳເນີນຄະດີ ແລະ ຄ່າປັບໄໝ. ທະນາຄານໄດ້ຮັບຮູ້ໜີ້ຕ້ອງສົ່ງເຫຼົ່ານີ້ຢ່າງຄົບຖ້ວນ ນະວັນທີເອກະສານລາຍງານສະບັບນີ້ ວັນທີ 31 ທັນວາ 2022.

ທະນາຄານຈະສືບຕໍ່ຕິດຕາມຄວາມຄືບໜ້າຢ່າງໃກ້ຊິດ ສຳລັບຄະດີອາຍາມີ ທະນາຄານເປັນໂຈດ ແລະ ອະດີດຮອງຜູ້ອຳນວຍການໃຫຍ່ເປັນຈຳເລີຍ. ເມື່ອມີການຕັດສິນຂັ້ນສຸດທ້າຍຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ທະນາຄານຈະດຳເນີນການດັດແກ້ຕາມຄວາມຈຳເປັນຕື່ມອີກໃນໄລຍະຕໍ່ໄປ.

### 26. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີຂອງໃບລາຍງານຖານະທາງການເງິນ

ບໍ່ມີເຫດການໃດເກີດຂຶ້ນນັບຕັ້ງແຕ່ວັນທີ 31 ທັນວາ 2022 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.

| ກະກຽມໂດຍ: | ກວດກາໂດຍ: | ອະນຸມັດໂດຍ: |
|---|---|---|
| ທ່ານ Hoang Thanh Lam<br>ຫົວໜ້າບັນຊີ-ບໍລິຫານ | ທ່ານ ນາງ Oulayphone Songeun<br>ຮອງຜູ້ອຳນວຍການໃຫຍ່ | ທ່ານ Pham Quang Phu<br>ຜູ້ອຳນວຍການໃຫຍ່ |



"ຊາຄອມແບັງ ລາວ ຂໍສະແດງຄວາມຮູ້ບຸນຄຸນ
ຢ່າງເລິກເຊິ່ງ ມາຍັງບັນດາລູກຄ້າ, ຄູ່ຮ່ວມທຸລະກິດ ທີ່ໃຫ້ຄວາມ ເຊື່ອໝັ້ນ
ແລະ ຄຽງຄູ່ກັບ ຊາຄອມແບັງ ລາວ ຕະຫຼອດໄລຍະເວລາທີ່ຜ່ານມາ ແລະ
ຂໍສະແດງຄວາມຮູ້ບຸນຄຸນ ມາຍັງອົງການຈັດຕັ້ງພັກລັດ ແລະ
ທະນາຄານ ແຫ່ງ ສປປ ລາວ ທີ່ໃຫ້ການຊ່ວຍເຫຼືອ ແລະ ສ້າງເງື່ອນໄຂ
ອັນແທດເໝາະໃຫ້ກັບການພັດທະນາຂອງ ທະນາຄານ ຊາຄອມແບັງ ລາວ.
ສຸດທ້າຍນີ້ ຂໍສະແດງຄວາມຂອບໃຈມາຍັງ ຄະນະການນຳ ທີ່ໄດ້ເອົາໃຈໃສ່
ຊີ້ນຳຢ່າງໃກ້ຊິດ ແລະ ບັນດາພະນັກງານ ຊາຄອມແບັງ ລາວ ທຸກທ່ານ
ທີ່ໄດ້ຄຽງບ່າຄຽງໄຫຼ່ກັບ ຊາຄອມແບັງ ລາວ ຕະຫຼອດມາ
ໂດຍຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆນາໆ
ອັນເປັນການປະກອບສ່ວນສ້າງ ຊາຄອມແບັງ ລາວ
ໃຫ້ນັບມື້ນັບເຂັ້ມແຂງ ແລະ ປະສົບຜົນສຳເລັດ."

